ສະໜັບສະໜູນໂດຍ: ອົງການຮ່ວມມືສາກົນ UNICEF

ທະບຽນພິມເລກທີ : .................

ຂະໜາດພິມ: 21x29,7 cm, ຈຳນວນ:............

ພິມທີ່: ...............

2012

ແຜນຈັດປະສົບການ ໜ່ວຍສິ່ງແວດລ້ອມອ້ອມຕົວເຮົາ ຊັ້ນອະນຸບານສຶກສາປີທີ 1

2012

# ແຜນຈັດປະສົບການ

# ໜ່ວຍສິ່ງແວດລ້ອມອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາປີທີ 1



ກະຊວງສຶກສາທິການ ແລະ ກິລາ

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

2012

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ

2421

ເລກທີ່.../ສສກ.ສວສ/2012

ນະຄອນຫຼວງວຽງຈັນ, ວັນທີ:............. 16 Jul 2012

# ຂໍ້ຕົກລົງຂອງລັດຖະມົນຕີ

## ວ່າດ້ວຍການຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 1

ເຫັນຕາມ: ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 282/ນຍ, ລົງວັນທີ 7 ກັນຍາ 2011;

ເຫັນຕາມ: ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ສະບັບເລກທີ 1124/ ສສກ.ຈຕ, ລົງວັນທີ 20 ເມສາ 2012.

ເຫັນຕາມ: ການສະເໜີຂອງສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

**ລັດຖະມົນຕີວ່າການກະຊວງສຶກທິການ ແລະ ກິລາ ຈຶ່ງຕົກລົງ**

ມາດຕາ 1: ຮັບຮອງ ແລະ ປະກາດນຳໃຊ້ຫຼັກສູດ ແລະ ປຶ້ມປະກອບການຮຽນ-ການສອນ ສຳລັບຊັ້ນອະນຸບານສຶກສາ ປີທີ 1 ສະບັບປະຕິຮູບ ໃນໂຮງຮຽນອະນຸບານ ທົ່ວປະເທດ ນັບແຕ່ ສົກຮຽນ 2012-2013 ເປັນຕົ້ນໄປ.

ມາດຕາ 2: ໃຫ້ກົມອະນຸບານປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ກົມຄຸ້ມຄອງການສຶກສາພາກເອກະຊົນ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວໃຫ້ໄດ້ຮັບຜົນດີ.

ມາດຕາ 3: ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ດຣ.ພັນຄຳ ວິພາວັນ

## ແຜນຈັດປະສົບການ

# ໜ່ວຍສິ່ງແວດລ້ອມອ້ອມຕົວເຮົາ

## ຊັ້ນອະນຸບານສຶກສາ ປີທີ 1


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ
ຈຸນລາ ເຂັມທອງ
ພູມະລີ ແສງຈັນນະວົງ
ວຽງແກ້ວ ພົມມະຈັກ
ສຸກສະຫວັນ ວິມານ
ຈັນທອນ ສຸວັນນະວົງ
ສະຫວຽນ ສີຍະວັນນຸວົງ
ລັດສະໝີ ບານເມືອງ
ມະນີວອນ ອາດຜາສຸກ
ພູມີ ພົມມະວົງສາ
ອາງຄຳ ບຸດສະດີ

ກວດແກ້ໂດຍ: ພວງຄຳ ສົມສະນິດ
ທອງແກ້ວ ອາສາ
ປາກຽນ ຫຼວງໄຊຊະນະ
ສົມບູນ ມາສຸວັນ
ເກດ ພັນລັກ
ສີພາພອນ ມະນີວັນ

ເຂົ້າໜ້າໂດຍ: ຈັນທະໄລ ເກີດຫຼ້າ
ທອງດຳ ທອງສິນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າ ວິທະຍາສາດການສຶກສາ ແຫ່ງຊາດ
2012

# ຄຳນຳ

ແຜນການຈັດປະສົບການໜ່ວຍສິ່ງແວດລ້ອມອ້ອມຕົວສເຮົາ ຮຽບຮຽງຂຶ້ນເພື່ອໃຫ້ຜູ້ບໍລິຫານການສຶກສານຳໃຊ້ໃນການສ້າງເປັນແຜນການສອນ ແລະ ເປັນບ່ອນອີງໃນການແຕ່ງບົດສອນ.

ເນື້ອໃນຄວາມຮູ້ທີ່ກຳນົດໃນກິດຈະກຳການຫຼິ້ນ ແລະ ຮຽນໃນແຕ່ລະວັນມີລັກສະນະບູລະນາການຄວາມຮູ້ທາງດ້ານພາສາລາວ, ຄະນິດສາດ ແລະ ວິທະຍາສາດທົ່ວໄປ.

ກິດຈະກຳການຫຼິ້ນ ແລະ ຮຽນທີ່ນຳມາກຳນົດໃນແຜນການສອນສະບັບນີ້ປະກອບມີ 6 ກິດຈະກຳເຊັ່ນ: ກິດຈະກຳວົງມົນ, ການເຄື່ອນໄຫວ ແລະ ຈັງຫວະ, ສິລະປະສ້າງສັນ, ເກມການສຶກສາ, ຫຼິ້ນກາງແຈ້ງ ແລະ ຫຼິ້ນຕາມມຸມ. ກິດຈະກຳເຫຼົ່ານີ້ສ້າງຂຶ້ນເພື່ອໃຫ້ເດັກໄດ້ຮັບການພັດທະນາຕາມສະມັດຖະພາບການກຽມຄວາມພ້ອມທາງດ້ານຮ່າງກາຍ, ດ້ານອາລົມ ແລະ ຈິດໃຈ, ດ້ານສັງຄົມ, ດ້ານພາສາ ແລະ ດ້ານສະຕິປັນຍາກ່ອນເຂົ້າຮຽນໃນຊັ້ນປະຖົມຢ່າງມີຄຸນນະພາບ.

ແຜນການຈັດປະສົບການສະບັບນີ້ເນັ້ນການສອນແບບເອົາເດັກເປັນໃຈກາງ ໂດຍໃຫ້ເດັກໄດ້ປະຕິບັດຕົວຈິງຜ່ານການຫຼິ້ນ ແລະ ຮຽນ ໂດຍມີຫຼັກການສຳຄັນດັ່ງນີ້:

1. ເດັກໄດ້ຮັບການກຽມຄວາມພ້ອມໃນທຸກດ້ານຕາມຄວາມສາມາດ ແລະ ທຳມະຊາດຂອງເດັກ ໂດຍຜ່ານການຫຼິ້ນ ແລະ ຮຽນຢ່າງເບີກບານມ່ວນຊື່ນ.
2. ເດັກໄດ້ຮຽນຮູ້ຕາມຄວາມສົນໃຈ, ຄວາມຕ້ອງການຈາກສິ່ງໃກ້ຕົວ, ຈາກທັກສະທີ່ງ່າຍໄປສູ່ທັກສະທີ່ຍາກຕາມລຳດັບ ໂດຍໄດ້ຮຽນຮູ້ເປັນລາຍບຸກຄົນ ແລະ ກຸ່ມ.
3. ການຈັດກິດຈະກຳການຫຼິ້ນ ແລະ ຮຽນແມ່ນໃຫ້ເດັກປະຕິບັດຕົວຈິງ ໂດຍເປີດໂອກາດ ໃຫ້ເດັກໄດ້ທົດລອງ, ປະດິດສ້າງຢ່າງສ້າງສັນ, ຄິດແກ້ໄຂບັນຫາ ແລະ ຄົ້ນພົບສິ່ງໃໝ່ ໆ ດ້ວຍຕົນເອງ.
4. ການສົ່ງເສີມປະສົບການຊີວິດໄດ້ເນັ້ນເນື້ອໃນທີ່ເດັກຄວາມຮຽນຮູ້ຈາກສັງຄົມ, ວັດທະນາທຳ ແລະ ສະພາບແວດລ້ອມທີ່ເດັກອາໄສຢູ່ໃນແຕ່ລະທ້ອງຖິ່ນ ແລະ ໃນນັ້ນໃຫ້ແຕ່ລະໂຮງຮຽນຄຳນຶງເຖິງຄວາມແຕກຕ່າງໃນການຮຽນຮູ້ຂອງເດັກແຕ່ລະຄົນ.

ນອກນັ້ນການນຳໃຊ້ຕົວຈິງໃນການສ້າງແຜນການສອນປະຈຳປີ, ເດືອນ, ອາທິດ ແລະ ປະຈຳວັນ ແລະ ການແຕ່ງບົດສອນຂອງແຕ່ລະໂຮງຮຽນ. ຈຳເປັນທີ່ຄູສອນຕ້ອງສຶກສາເນື້ອໃນທີ່ມີໃນປຶ້ມຄູ່ມືຄູ 6 ກິດຈະກຳເຊັ່ນ: ການເຄື່ອນໄຫວ ແລະ ຈັງຫວະ, ວົງມົນ, ສິລະປະສ້າງສັນ, ເກມການສຶກສາ, ຫຼິ້ນກາງແຈ້ງ ແລະ ຫຼິ້ນຕາມມຸມ. ສຶກສາວິທີການຈັດການຮຽນ-ການສອນ, ວິທີສ້າງຄຳຖາມ ແລະ ການບັນທຶກຂໍ້ມູນການຕິດຕາມພັດທະນາ ການຈາກປຶ້ມຄູ່ມືການຈັດກິດຈະກຳການຮຽນ-ການສອນ ແລະ ການຕິດຕາມປະເມີນຜົນ.

ຄະນະຮຽບຮຽງປຶ້ມແຜນການຈັດປະສົບການສະບັບນີ້ມີຄວາມຍິນດີຮັບຕ້ອນທຸກຄຳຄິດເຫັນທີ່ສ້າງສັນຈາກທ່ານຜູ້ຊົມໃຊ້ເພື່ອນຳໄປປັບປຸງປຶ້ມດັ່ງກ່າວໃຫ້ນັບມື້ດີຂຶ້ນໃນອະນາຄົດ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

# ສາລະບານ


| | |
|---|---|
| **ຈຸດປະສົງສຳລັບອາທິດທີ 1** | **1-2** |
| **1. ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ, ອາທິດທີ 1: ມື້ທີ 1** | **3** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ | 3 |
| ກິດຈະກຳວົງມົນ: ສິ່ງແວດລ້ອມທາງທຳມະຊາດ | 4 |
| ກິດຈະກຳສິລະປະສ້າງສັນ: ຂີດເສັ້ນກິ່ງ | 5 |
| ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ | 6 |
| ກິດຈະກຳເກມການສຶກສາ: ເກມຈັດໝວດໝູ່ຮູບພາບ | 7 |
| ກິດຈະກຳການຫຼິ້ນຕາມມູມ: ຫຼິ້ນໃນມູມອ່ານ, ມູມວິທະຍາສາດ ແລະ ທຳມະຊາດ | 8 |
| **2. ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ, ອາທິດທີ 1: ມື້ທີ 2** | **9** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ | 9 |
| ກິດຈະກຳວົງມົນ: ພືດ | 10 |
| ກິດຈະກຳສິລະປະສ້າງສັນ: ຕິດເຈ້ຍ | 11 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ຕົບຍຸງ | 12 |
| ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ | 13 |
| ກິດຈະກຳການຫຼິ້ນຕາມມູມ: ມູມວິທະຍາສາດ ແລະ ທຳມະຊາດ ແລະ ມູມສິລະປະສ້າງສັນ | 14 |
| **3.ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ, ອາທິດທີ 1: ມື້ທີ 3** | **15** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຄຳສັ່ງ | 15 |
| ກິດຈະກຳວົງມົນ: ສັດ | 16 |
| ກິດຈະກຳສິລະປະສ້າງສັນ: ຂີດຂຽນເລກ | 17 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລູລີ່ເຂົ້າສານ | 18 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 19 |
| ກິດຈະກຳການຫຼິ້ນຕາມມູມ: ຫຼິ້ນມູມເກມການສຶກສາ ແລະ ມູມອ່ານ | 20 |
| **4. ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ, ອາທິດທີ 1: ມື້ທີ 4** | **21** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ | 21 |
| ກິດຈະກຳວົງມົນ: ນ້ຳ ແລະ ອາກາດ | 22 |
| ກິດຈະກຳສິລະປະສ້າງສັນ: ຂີດວົງມົນ | 23 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ສົ່ງບານລອດຫວ່າງຂາ | 24 |
| ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ | 25 |
| ກິດຈະກຳການຫຼິ້ນຕາມມູມ: ຫຼິ້ນມູມສິລະປະສ້າງສັນ ແລະ ມູມອ່ານ | 26 |
| **5. ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ, ອາທິດທີ 1: ມື້ທີ 5** | **27** |
| ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຂໍ້ຕົກລົງ | 27 |
| ກິດຈະກຳວົງມົນ: ດິນ, ຫີນ, ຊາຍ | 28 |
| ກິດຈະກຳສິລະປະສ້າງສັນ: ຮ້ອຍທໍ່ດູດ ແລະ ໝາກປັດ | 29 |
| ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ມັດຕາຟັງສຽງ | 30 |
| ກິດຈະກຳເກມການສຶກສາ: ເກມຈັບຄູ່ຈຳນວນຮູບພາບກັບຕົວເລກ | 31 |

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ 32
**ຈຸດປະສົງອາທິດທີ 2** **33-34**
**6. ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ, ອາທິດທີ 2: ມື້ທີ 1** **35**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຄຳສັ່ງ 35
ກິດຈະກຳວົງມົນ: ບົວລະບັດຮັກສາພືດ 36
ກິດຈະກຳສິລະປະສ້າງສັນ: ປັ້ນດິນ 37
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເກັບໃບໄມ້ໃສ່ກະຕ່າ 38
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 39
ກິດຈະກຳການຫຼິ້ນຕາມມຸມ: ມຸມວິທະຍາສາດ ແລະ ທຳມະຊາດ ແລະ ມຸມອ່ານ 40
**7. ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ, ອາທິດທີ 2: ມື້ທີ 2** **41**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ 41
ກິດຈະກຳວົງມົນ: ບົວລະບັດຮັກສາສັດ 42
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນວົງມົນ 43
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນນ້ຳ, ຫຼິ້ນຊາຍ 44
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 45
ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ 46
**8. ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ, ອາທິດທີ 2: ມື້ທີ 3** **47**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 47
ກິດຈະກຳວົງມົນ: ປົກປັກຮັກສານ້ຳ 48
ກິດຈະກຳສິລະປະສ້າງສັນ: ຕິດຮູບພາບ 49
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເຊືອງຜ້າ 50
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 51
ກິດຈະກຳການຫຼິ້ນຕາມມຸມ: ຫຼິ້ນມຸມເກມການສຶກສາ ແລະ ມຸມສິລະປະສ້າງສັນ 52
**9. ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ, ອາທິດທີ 2: ມື້ທີ 4** **53**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ 53
ກິດຈະກຳວົງມົນ: ປົກປັກຮັກສາອາກາດ 54
ກິດຈະກຳສິລະປະສ້າງສັນ: ຂີດຂຽນຕົວເລກ 55
ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ຕາກເຄື່ອງ 56
ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 57
ກິດຈະກຳການຫຼິ້ນຕາມມຸມ: ຫຼິ້ນມຸມສິລະປະສ້າງສັນ ແລະ ມຸມເກມການສຶກສາ 58
**10.ໜ່ວຍ ສິ່ງແວດລ້ອມອ້ອມຕົວ, ອາທິດທີ 2: ມື້ທີ 5** **59**
ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຂໍ້ຕົກລົງ 59
ກິດຈະກຳວົງມົນ: ປົກປັກຮັກສາ ດິນ, ຫີນ ແລະ ຊາຍ 60
ກິດຈະກຳສິລະປະສ້າງສັນ: ຂີດເສັ້ນວົງມົນ 61
ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ 62
ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 63
ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ສິລະປະສ້າງສັນ 64

**ຈຸດປະສົງ ອາທິດທີ 3** 65-66

**11.ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 3: ມື້ທີ 1** **67**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ 67

ກິດຈະກຳວົງມົນ: ສິ່ງແວດລ້ອມທີ່ຄົນສ້າງຂຶ້ນ 68

ກິດຈະກຳສິລະປະສ້າງສັນ: ປັ້ນດິນ 69

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນນ້ຳ, ຫຼິ້ນຊາຍ 70

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 71

ກິດຈະກຳການຫຼິ້ນຕາມມຸມ: ມຸມວິທະຍາສາດ ແລະ ທຳມະຊາດ ແລະ ມຸມສິລະປະສ້າງສັນ 72

**12.ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 3: ມື້ທີ 2** **73**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຂໍ້ຕົກລົງ 73

ກິດຈະກຳວົງມົນ: ວັດ 74

ກິດຈະກຳສິລະປະສ້າງສັນ: ທາສີຮູບພາບ 75

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ຍາດບ່ອນ 76

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 77

ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມສິລະປະສ້າງສັນ 78

**13.ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 3: ມື້ທີ 3** **79**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 79

ກິດຈະກຳວົງມົນ: ສວນສາທາລະນະ 80

ກິດຈະກຳສິລະປະສ້າງສັນ: ຂີດເສັ້ນຊື່ 81

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນເຄື່ອງຫຼິ້ນໃນເດີ່ນ 82

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບທີ່ຄືກັນ 83

ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມເຄື່ອງຫຼິ້ນສຳຜັດ 84

**14.ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 3: ມື້ທີ 4** **85**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 85

ກິດຈະກຳວົງມົນ: ຕະຫຼາດ ແລະ ຖະໜົນ 86

ກິດຈະກຳສິລະປະສ້າງສັນ: ຕັດ ແລະ ຕິດເຈ້ຍ 87

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລູລີ່ເຂົ້າສານ 88

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 89

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ 90

**15.ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ, ອາທິດທີ 3: ມື້ທີ 5** **91**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ 91

ກິດຈະກຳວົງມົນ: ໂຮງໝໍ 92

ກິດຈະກຳສິລະປະສ້າງສັນ: ຂີດຂຽນຕົວເລກ 93

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ປັກທຸງ 94

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 95

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ 96

ຈຸດປະສົງ ອາທິດທີ 4 97-98

**16.ໜ່ວຍສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 4: ມື້ທີ 1 99**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈັງຫວະ 99

ກິດຈະກຳວົງມົນ: ວັດ 100

ກິດຈະກຳສິລະປະສ້າງສັນ: ພັບເຈ້ຍ 101

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ລຳວົງຍາດຕັ່ງ 102

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 103

ກິດຈະກຳການຫຼິ້ນຕາມມຸມ: ມຸມອ່ານ ແລະ ມຸມບົດບາດສົມມຸດ 104

**17.ໜ່ວຍສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 4: ມື້ທີ 2 105**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຄຳສັ່ງ 105

ກິດຈະກຳວົງມົນ: ສວນສາທາລະນະ 106

ກິດຈະກຳສິລະປະສ້າງສັນ: ຕັດເຈ້ຍ 107

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ສົ່ງດອກໄມ້ 108

ກິດຈະກຳເກມການສຶກສາ: ຈັດໝວດໝູ່ຮູບພາບ 109

ກິດຈະກຳການຫຼິ້ນຕາມມຸມ: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ 110

**18.ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 4: ມື້ທີ 3 111**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 111

ກິດຈະກຳວົງມົນ: ຕະຫຼາດ 112

ກິດຈະກຳສິລະປະສ້າງສັນ: ຂີດເສັ້ນ 113

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນນ້ຳ, ຫຼິ້ນຊາຍ 114

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 115

ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ 116

**19.ໜ່ວຍ ສິ່ງແວດລ້ອມອ້ອມຕົວເຮົາ ອາທິດທີ 4: ມື້ທີ 4 117**

ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມຈິນຕະນາການ 117

ກິດຈະກຳວົງມົນ: ຖະໜົນ 118

ກິດຈະກຳສິລະປະສ້າງສັນ: ຕິດເຈ້ຍ 119

ກິດຈະກຳການຫຼິ້ນກາງແຈ້ງ: ເຄື່ອງຫຼິ້ນໃນເດີ່ນ 120

ກິດຈະກຳເກມການສຶກສາ: ເກມຕໍ່ຮູບພາບ 121

ກິດຈະກຳການຫຼິ້ນຕາມມຸມ: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ 122

**20.ໜ່ວຍ ສິ່ງແວດລ້ອມອ້ອມຕົວ, ອາທິດທີ 4: ມື້ທີ 5 123**

ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ: ເຮັດທ່າທາງຕາມອໍ້ຕົກລົງ 123

ກິດຈະກຳວົງມົນ: ໂຮງໝໍ 124

ກິດຈະກຳສິລະປະສ້າງສັນ: ຂີດເສັ້ນ 125

ກິດຈະກຳການຫຼິ້ນກາງແຈ້ງ: ຫຼິ້ນ ເຊືອງຜ້າ 126

ກິດຈະກຳເກມການສຶກສາ: ເກມຈັບຄູ່ຮູບພາບກັບພະຍັນຊະນະ 127

ກິດຈະກຳການຫຼິ້ນຕາມມຸມ: ມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ 128

- ເອກະສານອ້າງອີງ 129

# ຈຸດປະສົງສຳລັບອາທິດທີ 1

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຝົນຕົກ, ປະໂຫຍດຂອງດິນ, ຫີນ, ຊາຍ ແລະ ປະກອບເລື່ອງທີ່ຄູເລົ່າ ຫົດນ້ຳຕົ້ນໄມ້, ລົມພັດໃບໄມ້ ແລະ ໃບໄມ້ຫຼົ່ນມາ ຈາກຕົ້ນຢ່າງມ່ວນຊື່ນ.
2. ເຮັດທ່າທາງຕາມຄຳສັ່ງ ໄກ່ຂັນ, ງົວຮ້ອງ ແລະ ເປັດຮ້ອງ ຖືກຕ້ອງ ແລະ ມ່ວນຊື່ນ.
3. ເຮັດທ່າທາງຕາມຈັງຫວະເພງ ສັດລ້ຽງ ຢ່າງມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ບອກສິ່ງແວດລ້ອມທາງທຳມະຊາດ ແລະ ບອກຊື່ ແລະ ປະໂຫຍດ ຂອງພືດ ແລະ ສັດ.
2. ເລົ່າຄຳຄ່ອງ ປະໂຫຍດ ຂອງດິນ, ຫີນ, ຊາຍ ປະກອບທ່າທາງ.
3. ນັບເລກປາກເປົ່າ 1-7 ອ່ານອອກສຽງພະຍັນຊະນະ ຂ, ງ, ຈ, ຖ.
4. ຮ້ອງເພງ ສັດລ້ຽງ ປະກອບທ່າທາງ ແລະ ຟັງການເລົ່ານິດເລື່ອງດ້ວຍຄວາມມ່ວນຊື່ນ. .
5. ເວົ້າເປັນຄຳ ຕາມຮູບພາບ: ງົວ ແລະ ຂຽດ.
6. ບອກປະໂຫຍດ ຂອງນ້ຳ, ອາກາດ, ດິນ, ຫີນ ແລະ ຊາຍ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ຂີດເສັ້ນກົ່ງຂຶ້ນ ແລະ ກົ່ງລົງ ຕາມຮອຍຈ້ຳ ຖືກຕ້ອງ.
2. ຕິດຮູບພາບ ຕົ້ນໄມ້ ແລະ ຫຍ້າຕາມແບບຖືກຕ້ອງ.
3. ຂີດຂຽນຕາມຮອຍຈ້ຳເລກ 7 ແລະ ຂີດເສັ້ນວົງມົນ ຊ້າຍຫາຂວາ ຕາມຮອຍຈ້ຳຖືກຕ້ອງ.
4. ຮ້ອຍທໍ່ດູດ ແລະ ໝາກປັດ ສະຫຼັບສີແດງ, ເຫຼືອງ ແລະ ຂຽວຖືກຕ້ອງ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ຕະລູດ, ໂອ້ນຊາ, ເດື່ອງດ່າງ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນແບບຫຼິ້ນປະດິດສ້າງ ຕົບຍຸງ, ສິ່ງບານລອດຫວ່າງຂາ, ມັດຕາຟັງສຽງ ແລະ ຫຼິ້ນແບບ ຫຼິ້ນພື້ນເມືອງ ລູລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ຈັດໝວດໝູ່ຮູບພາບຄົນ, ສັດ ແລະ ພືດ: ເດັກນ້ອຍ, ໄກ່ ແລະ ຜັກຖືກຕ້ອງ.
2. ນຳຮູບພາບທີ່ຄືກັນມາຈັບຄູ່ກັນ ຮູບພາບ: ໝາກມ່ວງ, ໝາກຂາມ ແລະ ໝາກພ້າວຖືກຕ້ອງ.
3. ຕໍ່ຮູບພາບຕາມແບບ ຮູບພາບ: ຊ້າງແກ່ໄມ້, ຮູບພາບ: ເດັກນ້ອຍຫົດນ້ຳດອກໄມ້ຖືກຕ້ອງ.
4. ນຳຈຳນວນຮູບພາບກັບຕົວເລກ 1-3 ມາຈັບຄູ່ກັນ: ຮູບພາບໄກ່ 1 ໂຕ ເລກ 1, ໝູ 2 ໂຕ ເລກ 2, ເສືອ 3 ໂຕ ເລກ 3 ຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

ຫຼິ້ນໃນມຸມອ່ານ, ມຸມວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ, ມຸມເກມການສຶກສາ, ມຸມຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຝົນຕົກ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ຝົນຕົກ.
3. ການບໍລິຫານຂ້າງ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂ້າງ.
2. ໃຫ້ເດັກຍ່າງເຢ່ງເຢ້ຕາມເສັ້ນຊື່.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຝົນຕົກ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຢຽດຂາອອກຄ່ອຍໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາການເຮັດທ່າທາງຕາມຈິນຕະນາການປະກອບຄຳຄ່ອງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ສິ່ງແວດລ້ອມທາງທຳມະຊາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກສິ່ງແວດລ້ອມທາງທຳມະຊາດ.
2. ເລົ່າຄຳຄ່ອງ ປະໂຫຍດຂອງດິນ, ຫີນ, ຊາຍ ປະກອບທ່າທາງ.

### II. ເນື້ອໃນຕົ້ນຕໍ

1. ສິ່ງແວດລ້ອມທາງທຳມະຊາດ: ພືດ, ສັດ, ນ້ຳ, ອາກາດ, ດິນ, ຫີນ ແລະ ຊາຍ.
2. ການເລົ່າຄຳຄ່ອງ ປະໂຫຍດຂອງດິນ, ຫີນ, ຊາຍ ປະກອບທ່າທາງ.

### III. ສື່ການຮຽນ-ການສອນ

1. ວັດຖຸຈິງ: ນ້ຳ, ດິນ, ຫີນ, ຊາຍ, ພືດ.
2. ຮູບພາບ: ໄກ່, ໝູ, ງົວ, ເສືອ, ຊ້າງ, ໝີ.
3. ບົດຄຳຄ່ອງ ປະໂຫຍດຂອງດິນ, ຫີນ, ຊາຍ (ປື້ມຄູ່ມືຄູ).
4. ບົດເພງ ສາຍນ້ຳໄຫຼ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສາຍນ້ຳໄຫຼ ປະກອບທ່າທາງ.
2. ໃຫ້ເດັກສັງເກດວັດຖຸຈິງຫຼືຮູບພາບ, ຄູສົນທະນາກັບເດັກກ່ຽວກັບ ສິ່ງແວດລ້ອມທາງທຳມະຊາດ ແລະ ເດັກບອກສິ່ງແວດລ້ອມທາງທຳມະຊາດ.
3. ໃຫ້ເດັກເລົ່າຄຳຄ່ອງ ປະກອບທ່າທາງ, ຄູສົນທະນາກັບເດັກກ່ຽວກັບ ເນື້ອໃນຄຳຄ່ອງ.
4. ໃຫ້ເດັກເວົ້າຄືນສິ່ງແວດລ້ອມທາງທຳມະຊາດ ແລະ ເລົ່າຄຳຄ່ອງ.
5. ສຶກສາອົບຮົມເດັກກ່ຽວກັບ ການລະມັດລະວັງໃນການຫຼິ້ນ ນ້ຳ, ດິນ, ຫີນ ແລະ ຊາຍ.

### V. ການວັດ ແລະ ປະເມີນຜົນ

**ສັງເກດ:**

1. ການບອກສິ່ງແວດລ້ອມທາງທຳມະຊາດ.
2. ການເລົ່າຄຳຄ່ອງ ປະໂຫຍດຂອງດິນ, ຫີນ, ຊາຍ ປະກອບທ່າທາງ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ຂີດເສັ້ນກົ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນກົ່ງຂຶ້ນ ແລະ ກົ່ງລົງຕາມຮອຍຈ້ຳຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຂີດເສັ້ນກົ່ງຂຶ້ນ ແລະ ກົ່ງລົງຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປື້ມບົດເຝິກຫັດພາສາລາວຫຼັ້ມທີ 2 ຫຼື  ເຈ້ຍແບບຂີດເສັ້ນກົ່ງຂຶ້ນ ແລະ ກົ່ງລົງຕາມຮອຍຈ້ຳ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກກຳມື ແລະ ແບມື.
2. ຄູແນະນຳ, ສາທິດການຂີດເສັ້ນກົ່ງຂຶ້ນ ແລະ ກົ່ງລົງຕາມຮອຍຈ້ຳ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນກົ່ງຂຶ້ນ ແລະ ກົ່ງລົງຕາມຮອຍຈ້ຳ.
2. ຄວາມພະຍາຍາມຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຕະລູດ, ໂອ້ນຊາ, ເຕື່ອງດ່າງ ແລະ ລອດກົງລົດ.

### III. ສື່ການຮຽນ-ການສອນ

1. ຕະລູດ, ໂອ້ນຊາ, ເຕື່ອງດ່າງ ແລະ ກົງລົດ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.
2. ບົດຄຳຄ່ອງ ປະໂຫຍດຂອງດິນ, ຫີນ, ຊາຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ປະໂຫຍດຂອງດິນ, ຫີນ, ຊາຍ
2. ຄູແນະນຳການຫຼິ້ນຕະລູດ, ໂອ້ນຊາ, ເຕື່ອງດ່າງ ແລະລອດກົງລົດ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ອຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕະລູດ, ໂອ້ນຊາ, ເຕື່ອງດ່າງ ແລະ ລອດກົງລົດ.
5. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາຫຼິ້ນຕະລູດ, ໂອ້ນຊາ, ເຕື່ອງດ່າງ ແລະ ລອດກົງລົດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັດໝວດໝູ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຈັດໝວດໝູ່ຮູບພາບ ຄົນ, ສັດ ແລະ ພືດຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັດໝວດໝູ່ຮູບພາບ ຄົນ, ສັດ, ພືດ: ເດັກນ້ອຍ, ໄກ່ ແລະ ຜັກ.

### III. ສື່ການຮຽນ-ການສອນ

1. ເກມຈັດໝວດໝູ່ຮູບພາບ ຄົນ, ສັດ, ພືດ: ເດັກນ້ອຍ, ໄກ່ ແລະ ຜັກ.
2. ບົດຄຳຄ່ອງ ປະໂຫຍດຂອງດິນ, ຫີນ ແລະ ຊາຍ.
3. ເກມເກົ່າ ເກມລຽນລຳດັບຮູບພາບ ກິດຈະກຳປະຈຳວັນ: ເດັກນ້ອຍນຸ່ງເຄື່ອງໄປໂຮງຮຽນ ແລະ ກັບບ້ານ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ປະໂຫຍດຂອງດິນ, ຫີນ, ຊາຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັດໝວດໝູ່ຮູບພາບຂອງຄົນ ພືດ, ສັດ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກ ຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເກມ ໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຈັດໝວດໝູ່ຮູບພາບ.
2. ຄວາມພະຍາຍາມຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້:  ມຸມອ່ານ ແລະ ມຸມວິທະຍາສາດ ແລະ ທຳມະຊາດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມວິທະຍາສາດ ແລະ ທຳມະຊາດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ ເບິ່ງປຶ້ມເລື່ອງ ແລະ ອ່ານຮູບພາບຕາມປຶ້ມເລື່ອງ.
2. ການຫຼິ້ນໃນມຸມວິທະຍາສາດ ແລະ ທຳມະຊາດ: ສັງເກດ ແລະ ສຳຜັດ ຜັກ, ນ້ຳ, ຫີນ ແລະ ຊາຍ.

### III. ສື່ການຮຽນ-ການສອນ

1. ປຶ້ມເລື່ອງກ່ຽວກັບສັດ.
2. ຜັກ, ນ້ຳ, ຫີນ ແລະ ອ່າງຊາຍ.
3. ບັດເຂົ້າມຸມຫຼິ້ນ.
4. ບົດເພງ ສາຍນ້ຳໄຫຼ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສາຍນ້ຳໄຫຼ.
2. ຄູ ແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມວິທະຍາສາດ ແລະ ທຳມະຊາດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ  ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມມີລະບຽບໃນການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ຫົດນໍ້າຕົ້ນໄມ້, ລົມພັດໃບໄມ້ ແລະ ໃບໄມ້ຫຼົ່ນມາຈາກຕົ້ນ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແຂວ (ປຶ້ມຄູ່ມືຄູ).

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກບໍລິຫານແຂວ.
2. ໃຫ້ເດັກຍ່າງຕາມບາດເຄາະ ຊ້າ, ໄວ.
3. ຄູແນະນໍາການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ຫົດນໍ້າຕົ້ນໄມ້, ລົມພັດໃບໄມ້ຫຼົ່ນມາຈາກຕົ້ນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງໄກ່ຕົບປີກຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພເວລາເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ພືດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກຊື່ ແລະ  ປະໂຫຍດຂອງພືດ.
2. ນັບເລກປາກເປົ່າແຕ່ 1-7.

## II. ເນື້ອໃນຕົ້ນຕໍ

1. ຊື່ພືດ: ຕົ້ນໝາກມ່ວງ, ຜັກກາດ, ຜັກບົ້ງ, ຜັກຕຳນິນ, ຫຍ້າຄາ, ປະໂຫຍດຂອງພືດ: ຕົ້ນໄມ້ໃຫ້ຮົ່ມ,ເຮັດເຮືອນ ເຮັດໂຕະ, ຕັ່ງ, ຜັກະເປັນອາຫານຂອງຄົນ, ຫຍ້າເປັນອາຫານຂອງສັດ.
2. ການນັບເລກປາກເປົ່າແຕ່ 1-7.

## III. ສື່ການຮຽນ-ການສອນ

ຮູບພາບ: ຕົ້ນໝາກມ່ວງ, ຜັກກາດ, ຜັກບົ້ງ ຜັກຕຳນິນ, ຫຍ້າຄາ, ຫຍ້າຂວາກ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບພືດທີ່ເດັກເຄີຍເຫັນ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບ ຊື່ພືດແລະປະໂຫຍດຂອງພືດ.
3. ໃຫ້ເດັກບອກຊື່ ແລະ ປະໂຫຍດຂອງພືດ.
4. ໃຫ້ເດັກນັບເລກປາກເປົ່າ 1-7.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ພືດ,  ປະໂຫຍດຂອງພືດ ແລະ  ນັບປາກເປົ່າ 1-7.
6. ສຶກສາອົບຮົມເດັກກ່ຽວກັບ ການກິນ: ຄວນກິນຜັກ ແລະ ໝາກໄມ້ທຸກມື້.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກຊື່ ແລະ ປະໂຫຍດຂອງພືດ.
2. ການນັບປາກເປົ່າ 1-7.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕິດເຈ້ຍ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕິດຮູບພາບຕົ້ນໄມ້ ແລະ ຫຍ້າຕາມແບບຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຕິດຮູບພາບຕົ້ນໄມ້ ແລະ ຫຍ້າຕາມແບບ.

## III. ສື່ການຮຽນ-ການສອນ

1. ຮູບພາບຕົ້ນໄມ້ ແລະ ຫຍ້າ.
2. ເຈ້ຍ, ຜ້າເຊັດມື, ນ້ຳລ້າງມື, ໄມ້ທາກາວ, ກາວ ຫຼື ກາວເຂົ້າໜຽວຕົ້ມ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກກຳມື ແລະ ແບມື.
2. ຄູແນະນຳ, ສາທິດການຕິດຮູບພາບຕາມແບບ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມເອົາໃຈໃສ່ໃນການຕິດຮູບພາບ ຕົ້ນໄມ້ ແລະ ຫຍ້າ.
2. ຄວາມສາມັກຄີກັບໝູ່ເພື່ອນ.
3. ຄວາມຖືກຕ້ອງໃນການຕິດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ຕົບຍຸງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ຕົບຍຸງ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ຕົບຍຸງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກລຽນແຖວຕົບມືພ້ອມທັງນັບເລກປາກເປົ່າ 1-7.
2. ຄູ ແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ຕົບຍຸງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນ ຕົບຍຸງ.
5. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາຫຼິ້ນແບບຫຼິ້ນ ຕົບຍຸງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ຕົບຍຸງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບທີ່ຄືກັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳຮູບພາບທີ່ຄືກັນ ມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບທີ່ຄືກັນ: ໝາກມ່ວງ, ໝາກຂາມ ແລະ ໝາກພ້າວ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບທີ່ຄືກັນ: ໝາກມ່ວງ, ໝາກຂາມ ແລະ ໝາກພ້າວ.
2. ເກມເກົ່າ ເກມຈັດໝວດໝູ່ຮູບພາບຄົນ, ສັດ, ພືດ: ເດັກນ້ອຍ, ໄກ່ ແລະ ຜັກ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນັບເລກປາກເປົ່າ 1-7.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບ ແລະ ແນະນຳການຫຼິ້ນເກັບມ້ຽນ.
4. ໃຫ້ເດັກ ຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ ຄວາມອົດທົນ, ເອົາແບ່ງປັນ, ການລໍຄອຍ ແລະ ການ ເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຈັບຄູ່ຮູບພາບທີ່ຄືກັນ.
2. ການມີສ່ວນຮ່ວມເດັກແຕ່ລະຄົນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມວິທະຍາສາດ ແລະ ທຳມະຊາດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ:

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມວິທະຍາສາດ ແລະ ທຳມະຊາດ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມວິທະຍາສາດ ແລະ ທຳມະຊາດ: ປູກພືດ.
2. ການຫຼິ້ນໃນມຸມ ສິລະປະສ້າງສັນ: ຕິດຮູບພາບ ຕົ້ນໄມ້ ແລະ ຫຍ້າຕາມແບບ.

### III. ສື່ການຮຽນ-ການສອນ

1. ແກ່ນພືດ, ຕົ້ນໄມ້ນ້ອຍ, ໂຖປູກ, ດິນ ແລະ ຫຍ້າ.
2. ກາວ ຫຼື ກາວເຂົ້າໜຽວຕົ້ມ, ເຈ້ຍ ແລະ ໄມ້ທາກາວ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນັບເລກປາກເປົ່າ 1-7.
2. ຄູແນະນຳວິທີຫຼິ້ນຕາມມຸມ ວິທະຍາສາດ ແລະ ທຳມະຊາດ, ມຸມສິລະປະສ້າງສັນ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມວິທະຍາສາດ ແລະ ທຳມະຊາດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຄຳສັ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຄຳສັ່ງຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຄຳສັ່ງ: ໄກ່ຂັນ, ງົວຮ້ອງ ແລະ ໝູຮ້ອງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານມື (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື.
2. ໃຫ້ເດັກຍ່າງລອດບ້ວງ.
3. ຄູສາທິດການເຮັດທ່າທາງຕາມຄຳສັ່ງ: ໄກ່ຂັນ, ງົວຮ້ອງ ແລະ ໝູຮ້ອງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງ ຢຽດຂາຊື່ເອົາມືບີບຂາຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຄຳສັ່ງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຄຳສັ່ງ ຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ສັດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ

1. ຮ້ອງເພງ ສັດລ້ຽງ ປະກອບທ່າທາງ.
2. ບອກຊື່ແລະ ປະໂຫຍດຂອງສັດ.
3. ເວົ້າເປັນຄຳຕາມຮູບພາບ ງົວ ແລະ ຂຽດ.

## II. ເນື້ອໃນຕົ້ນຕໍ

1. ການຮ້ອງເພງ ສັດລ້ຽງ ປະກອບທ່າທາງ.
2. ຊື່ຂອງສັດ: ໄກ່, ໝູ, ງົວ, ຊ້າງ, ເສືອ ແລະ ໝີ, ປະໂຫຍດຂອງສັດ: ເປັນອາຫານ, ໃຊ້ແຮງງານ ແລະ ເອົາໄວ້ເບິ່ງ.
3. ການເວົ້າເປັນຄຳຕາມຮູບພາບ ງົວ ແລະ ຂຽດ.

## III. ສື່ການຮຽນ-ການສອນ

1. ຮູບພາບ: ໄກ່, ໝູ, ງົວ, ຊ້າງ, ເສືອ ແລະ ໝີ.
2. ຮູບພາບ ງົວ ແລະ ຂຽດ.
3. ບົດເພງ ສັດລ້ຽງ (ປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບສັດທີ່ເຄີຍເຫັນ.
2. ໃຫ້ເດັກຮ້ອງເພງ ສັດລ້ຽງ ປະກອບທ່າທາງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນເພງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກັບເດັກກ່ຽວກັບຊື່ສັດ, ປະໂຫຍດຂອງສັດ, ເດັກບອກຊື່ ແລະ ປະໂຫຍດຂອງສັດ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ງົວ ແລະ ຂຽດ.
5. ໃຫ້ເດັກເວົ້າຄືນກ່ຽວກັບຊື່ສັດ, ປະໂຫຍດຂອງສັດ,ຮ້ອງເພງ ແລະ ເວົ້າເປັນຄຳຕາມຮູບພາບ.
6. ສຶກສາອົບຮົມເດັກກ່ຽວກັບ ການລ້ຽງສັດຕ້ອງໃຫ້ອາຫານສັດ ແລະ ຮັກສັດລ້ຽງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຮ້ອງເພງ ສັດລ້ຽງ ປະກອບທ່າທາງ.
2. ການບອກຊື່ ແລະ ປະໂຫຍດຂອງສັດ.
3. ການເວົ້າເປັນຄຳຕາມຮູບພາບ: ງົວ ແລະ ຂຽດ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດຂຽນຕາມຮອຍຈ້ຳຕົວເລກ 7 ຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການ ຂີດຂຽນຕາມຮອຍຈ້ຳຕົວເລກ 7.

### III. ສື່ການຮຽນ-ການສອນ

ປຶ້ມບົດເຝິກຫັດຄະນິດສາດເຫຼັ້ມ 2 ຫຼື ເຈ້ຍແບບຂີດຂຽນຕາມຮອຍຈ້ຳຕົວເລກ 7.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂີດຂຽນຕົວເລກຢູ່ກາງຫາວ.
2. ຄູແນະນຳ, ສາທິດວິທີຂີດຕາມຮອຍຈ້ຳຕົວເລກ 7 ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ບໍ່ຂີດກັນ, ການແບ່ງປັນສໍ, ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມພະຍາຍາມໃນການຂີດຂຽນຕົວເລກຕາມຮອຍຈ້ຳ.
2. ຄວາມຖືກຕ້ອງໃນການຂີດຂຽນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ລູ່ລີ່ເຂົ້າສານ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນ ແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ.

## III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ລູ່ລີ່ເຂົ້າສານ ແລະ ວິທີຫຼິ້ນ (ປຶ້ມຄູ່ມືຄູ).
2. ບົດເພງ ສັດລ້ຽງ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສັດລ້ຽງ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
5. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນເກມຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ຊ້າງແກ່ໄມ້.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ຊ້າງແກ່ໄມ້.
2. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ໝາກມ່ວງ, ໝາກຂາມ ແລະ ໝາກພ້າວ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບ ສັດທີ່ເຄີຍໄດ້ເຫັນ.
2. ຄູສະເໜີຊື່ເກມ.
3. ຄູ ສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກ ຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເກມການສຶກສາ ຫຼິ້ນເກມຕໍ່ຮູບພາບ ຊ້າງແກ່ໄມ້.
2. ການຫຼິ້ນໃນມຸມອ່ານ ອ່ານຮູບພາບຕາມປຶ້ມນິທານ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ຊ້າງແກ່ໄມ້.
2. ປຶ້ມນິທານ.
3. ບັດເຂົ້າມຸມຫຼິ້ນ.
4. ບົດເພງ ສັດລ້ຽງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສັດລ້ຽງ.
2. ຄູແນະນຳວິທີຫຼິ້ນຕາມມຸມເກມການສຶກສາ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນມຸມເກມການສຶກສາ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງ ສັດລ້ຽງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ສັດລ້ຽງ.
3. ການບໍລິຫານຂາ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກ ບໍລິຫານຂາ.
2. ໃຫ້ເດັກຍ່າງ ກຳມື ແລະ ແບມືໄປພ້ອມ.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ສັດລ້ຽງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງຢຽດຂາຊື່ກົ້ມຕົວລົງເອົາສອງມືແປະປາຍຕີນ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຈັງຫວະເພງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ນ້ຳ ແລະ ອາກາດ

### I. ຈຸດປະສົງເພື່ອໃຫ້ເດັກສາມາດ:

1. ຟັງເລົ່າເລື່ອງດ້ວຍຄວາມມ່ວນຊື່ນ.
2. ບອກປະໂຫຍດຂອງນ້ຳ ແລະ ອາກາດ.

### II. ເນື້ອໃນຕົ້ນຕໍ

1. ການຟັງເລົ່າເລື່ອງ ເມັດນ້ຳຝົນພະຈົນໄພ.
2. ປະໂຫຍດຂອງນ້ຳໃຊ້ໄວ້ດື່ມ ແລະ ໃຊ້ ຫົດຜັກ, ອາບ, ຊັກເຄື່ອງ ແລະ ລ້າງສິ່ງຂອງເຄື່ອງໃຊ້ຕ່າງໆ.

- ປະໂຫຍດຂອງອາກາດ ໃຊ້ໄວ້ຫາຍໃຈ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ເດັກອາບນ້ຳ, ຫົດຕົ້ນໄມ້.
2. ບົດເລື່ອງ ເມັດນ້ຳຝົນພະຈົນໄພ ແລະ ຮູບພາບປະກອບ.
3. ບົດເພງ ສັດລ້ຽງ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສັດລ້ຽງ ປະກອບທ່າທາງ.
2. ຄູເລົ່າເລື່ອງ ແລະ ຄູສົນທະນາກັບເດັກກ່ຽວກັບເນື້ອໃນບົດເລື່ອງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກັບເດັກກ່ຽວກັບປະໂຫຍດຂອງນ້ຳ ແລະ ອາກາດ ເດັກບອກ ປະໂຫຍດຂອງນ້ຳ ແລະ ອາກາດ.
4. ໃຫ້ເດັກທົດລອງຕົວຈິງ (ການອັດດັງ), ຄູສົນທະນາກັບເດັກກ່ຽວກັບປະໂຫຍດຂອງອາກາດ ແລະ ເດັກບອກປະໂຫຍດຂອງອາກາດ.
5. ໃຫ້ເດັກເວົ້າຄືນກ່ຽວກັບປະໂຫຍດຂອງນ້ຳ ແລະ ອາກາດ.
6. ສຶກສາອົບຮົມເດັກກ່ຽວກັບ ການປະຢັດນ້ຳບໍ່ເປີດນ້ຳຖິ້ມ ແລະ ຮັກສາອາກາດບໍ່ຈູດຂີ້ເຫຍື້ອ.

### III. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຟັງເລົ່າເລື່ອງດ້ວຍຄວາມມ່ວນຊື່ນ.
2. ການບອກປະໂຫຍດຂອງນ້ຳ ແລະ ອາກາດ.

# ກິດຈະກໍາສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນວົງມົນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນວົງມົນ ຊ້າຍ ຫາ ຂວາ ຕາມຮອຍຈໍ້າຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການ ຂີດເສັ້ນວົງມົນ ຊ້າຍ ຫາ ຂວາ ຕາມຮອຍຈໍ້າ.

### III. ສື່ການຮຽນ-ການສອນ

1. ສໍດໍາ.
2. ປຶ້ມບົດເຝິກຫັດພາສາລາວ ເຫຼັ້ມທີ 2 ຫຼື ເຈ້ຍແບບຂີດເສັ້ນວົງມົນ ຊ້າຍ ຫາ ຂວາ ຕາມຮອຍຈໍ້າ.

### IV. ກິດຈະກໍາການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂີດເສັ້ນວົງມົນຢູ່ກາງຫາວ.
2. ຄູແນະນໍາ, ສາທິດການຂີດເສັ້ນວົງມົນ ຂວາ ຫາ ຊ້າຍ ຕາມຮອຍຈໍ້າ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນໍາສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນວົງມົນ ຊ້າຍ ຫາ ຂວາ ຕາມຮອຍຈໍ້າ.
2. ຄວາມພະຍາຍາມຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ສົ່ງບານລອດຫວ່າງຂາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ສົ່ງບານລອດຫວ່າງຂາ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນ ແບບຫຼິ້ນປະດິດສ້າງ ສົ່ງບານລອດຫວ່າງຂາ.

### III. ສື່ການຮຽນ-ການສອນ

1. ໝາກບານນ້ອຍ ຫຼື ບານທີ່ຜະລິດຂຶ້ນເອງ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກລຽນແຖວ ສັ່ນຄໍ່ມື, ໝູນເອິ່ງ ແລະ ຍ່າງເປັນວົງມົນ.
2. ຄູແນະນຳ ແລະ ສາທິດການຫຼິ້ນແບບຫຼິ້ນ ສົ່ງບານລອດຫວ່າງຂາ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບ ສົ່ງບານລອດຫວ່າງຂາ.
5. ສຶກສາອົບຮົມເດັກ ໃນເວລາຫຼິ້ນແບບຫຼິ້ນ ສົ່ງບານລອດຫວ່າງຂາ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນປະດິດສ້າງ ສົ່ງບານລອດຫວ່າງຂາ ຢ່າງມ່ວນຊື່ນຢ່າງປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ເດັກນ້ອຍຫົດນໍ້າດອກໄມ້.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ເດັກນ້ອຍຫົດນໍ້າດອກໄມ້.
2. ເກມຕໍ່ຮູບພາບ ຊ້າງແກ່ໄມ້.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນັບເລກປາກເປົ່າ 1-7.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມສິລະປະສ້າງສັນ ຂີດເສັ້ນວົງມົນ ຊ້າຍ ຫາ ຂວາ ຕາມຮອຍຈ້ຳ.
2. ການຫຼິ້ນໃນມຸມອ່ານ ເບິ່ງປຶ້ມເລື່ອງເມັດນ້ຳຝົນພະຈົນໄພ.

### III. ສື່ການຮຽນ-ການສອນ

1. ປຶ້ມເລື່ອງເມັດນ້ຳຝົນພະຈົນໄພ.
2. ປຶ້ມບົດເຝິກຫັດ ພາສາລາວເຫຼັ້ມທີ 2 ຫຼື ເຈ້ຍແບບຂີດເສັ້ນວົງມົນ ຊ້າຍ ຫາ ຂວາຕາມຮອຍຈ້ຳ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບມຸມທີ່ເຄີຍຫຼິ້ນຜ່ານມາ.
2. ຄູ ແນະນຳວິທີຫຼິ້ນຕາມມຸມສິລະປະສ້າງສັນ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຂໍ້ຕົກລົງ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຂໍ້ຕົກລົງຖືກຕ້ອງ ແລະ ມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຂໍ້ຕົກລົງ: ຕົບມື 1 ບາດເຮັດທ່າທາງເປັດຍ່າງ ແລະ ຕົບມື 2 ບາດ ເຮັດທ່າທາງກົບເຕັ້ນ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແອວ (ປື້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກ ບໍລິຫານແອວ.
2. ໃຫ້ເດັກລຽນແຖວເຕັ້ນໄປທາງໜ້າ.
3. ຄູສາທິດການເຮັດທ່າທາງຕາມຂໍ້ຕົກລົງ: ຕົບມື 1 ບາດ ເຮັດທ່າທາງເປັດຍ່າງ ແລະ ຕົບມື 2 ບາດ ເຮັດທ່າທາງກົບເຕັ້ນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງດົມດອກໄມ້.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພເວລາເຮັດທ່າທາງຕາມຂໍ້ຕົກລົງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມກ້າຫານໃນການເຮັດທ່າທາງຕາມຂໍ້ຕົກລົງ.
2. ຄວາມເບີກບານຂອງເດັກ.
3. ຄວາມຖືກຕ້ອງຂອງການປະຕິບັດຕາມຂໍ້ຕົກລົງ.

# ກິດຈະກຳວົງມົນ

## ຫົວຂໍ້: ດິນ, ຫີນ, ຊາຍ

## I. ຈຸດປະສົງ:

ເພື່ອໃຫ້ເດັກສາມາດ:

1. ບອກ ປະໂຫຍດຂອງ ດິນ ຫີນ ແລະ ຊາຍ.
2. ອ່ານອອກສຽງພະຍັນຊະນະ: ຂ, ງ, ຈ, ຖ.

## II. ເນື້ອໃນຕົ້ນຕໍ

1. ປະໂຫຍດຂອງດິນ: ໃຊ້ໄວ້ປູກຝັງ ແລະ ຜະລິດເຄື່ອງໃຊ້ (ໝໍ້, ໄຫ, ດິນຈີ່, ໂຖດອກໄມ້...) ປະໂຫຍດຂອງຫີນ ແລະ ຊາຍ: ໃຊ້ໄວ້ສ້າງຖະໜົນ ແລະ ເຮືອນ.
2. ການອ່ານອອກສຽງພະຍັນຊະນະ: ຂ, ງ, ຈ, ຖ.

## III. ສື່ການຮຽນ-ການສອນ

1. ຮູບພາບ ຫຼື ວັດຖຸຈິງ ໝໍ້, ໄຫ, ດິນຈີ່, ໂຖດອກໄມ້, ຖະໜົນ, ເຮືອນ.
2. ບົດຄຳຄ່ອງ ປະໂຫຍດຂອງ ດິນ, ຫີນ, ຊາຍ.
3. ບັດພະຍັນຊະນະ: ຂ, ງ, ຈ, ຖ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບ ດິນ, ຫີນ ແລະ ຊາຍ ທີ່ເຄີຍເຫັນ.
2. ໃຫ້ເດັກເລົ່າຄຳຄ່ອງ ປະໂຫຍດຂອງຫີນ, ດິນ, ຊາຍ ປະກອບທ່າທາງ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກັບເດັກກ່ຽວກັບປະໂຫຍດຂອງດິນ, ຫີນ, ຊາຍ ແລະ ໃຫ້ເດັກບອກປະໂຫຍດຂອງຫີນ, ດິນ ແລະ ຊາຍ.
4. ໃຫ້ເດັກອ່ານອອກສຽງພະຍັນຊະນະ: ຂ, ງ, ຈ, ຖ.
5. ໃຫ້ເດັກເວົ້າຄືນກ່ຽວກັບປະໂຫຍດຂອງດິນ, ຫີນ, ຊາຍ ແລະ ອ່ານອອກສຽງພະຍັນຊະນະ.
6. ສຶກສາອົບຮົມເດັກກ່ຽວກັບການບົວລະບັດຮັກສາເຄື່ອງໃຊ້ທີ່ເຮັດດ້ວຍ ດິນ, ຫີນ ແລະ ຊາຍ.

## V. ການວັດ ແລະ ປະເມີນຜົນ

ສັງເກດ

1. ການບອກປະໂຫຍດຂອງ ດິນ, ຫີນ ແລະ ຊາຍ.
2. ການອ່ານອອກສຽງພະຍັນຊະນະ: ຂ, ງ, ຈ, ຖ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຮ້ອຍທໍ່ດູດ ແລະ ໝາກປັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຮ້ອຍທໍ່ດູດ ແລະ ໝາກປັດ ສະຫຼັບສີແດງ, ເຫຼືອງ ແລະ ສີຂຽວຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຮ້ອຍທໍ່ດູດ ແລະ ໝາກປັດ ສະຫຼັບສີແດງ, ເຫຼືອງ ແລະ ສີຂຽວ.

### III. ສື່ການຮຽນ-ການສອນ

1. ເຊືອກ.
2. ທໍ່ດູດ.
3. ໝາກປັດ ສີແດງ, ເຫຼືອງ ແລະ ຂຽວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງ ກຳມື ແລະ ແບມື.
2. ຄູແນະນຳ, ສາທິດການຮ້ອຍ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ ແລະ ການເກັບ ມ້ຽນອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຮ້ອຍທໍ່ດູດ ແລະ ໝາກປັດ ສະຫຼັບສີແດງ, ເຫຼືອງ ແລະ ສີຂຽວ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ມັດຕາຟັງສຽງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ມັດຕາຟັງສຽງ ຢ່າງມ່ວນຊື່ນ ແລະ ປອດໄພ

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ມັດຕາຟັງສຽງ.

### III. ສື່ການຮຽນ-ການສອນ

1. ຜ້າ.
2. ວິທີຫຼິ້ນ (ປຶ້ມຄູ່ມືຄູ).
3. ກອງ, ກະແຊັກ ຫຼື ເຄື່ອງເຄາະຈັງຫວະທີ່ມີໃນທ້ອງຖິ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກລຽນແຖວເຮັດທ່າທາງເປົ່າປູມເປົ້າ.
2. ຄູ ແນະນຳ ແລະ ສາທິດ ການຫຼິ້ນແບບຫຼິ້ນ ມັດຕາຟັງສຽງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບ ມັດຕາຟັງສຽງ.
5. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາຫຼິ້ນແບບຫຼິ້ນ ມັດຕາຟັງສຽງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ມັດຕາຟັງສຽງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຈຳນວນຮູບພາບກັບຕົວເລກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດນຳຈຳນວນຮູບພາບ ກັບຕົວເລກ 1-3 ມາຈັບຄູ່ກັນຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຈຳນວນຮູບພາບກັບຕົວເລກ 1-3: ໄຫດິນ 1 ໜ່ວຍ ເລກ 1, ໝໍ້ດິນ 2 ໜ່ວຍ ເລກ 2, ໂຖດອກໄມ້ 3 ໂຖ ເລກ 3.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຈຳນວນຮູບພາບກັບຕົວເລກ 1-3: ໄຫດິນ 1 ໜ່ວຍ ເລກ 1, ໝໍ້ດິນ 2 ໜ່ວຍ ເລກ 2, ໂຖດອກໄມ້ 3 ໂຖ ເລກ 3.
2. ບັດຕົວເລກ 1-3.
3. ເກມເກົ່າ ເກມຕໍ່ຮູບພາບ ເດັກນ້ອຍຫົດນ້ຳຕົ້ນໄມ້.
4. ບົດຄຳຄ່ອງ ປະໂຫຍດຂອງຫີນ, ດິນຊາຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ປະໂຫຍດຂອງຫີນ, ດິນຊາຍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກ ຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຈັບຄູ່ຈຳນວນຮູບພາບກັບຕົວເລກ 1-3.
2. ການມີສ່ວນຮ່ວມຂອງເດັກແຕ່ລະຄົນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມເກມການສຶກສາ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຫຼິ້ນພິມຝາມື, ນິ້ວມື ໃນອ່າງຊາຍ ແລະ ຫຼິ້ນຕໍ່ບ້ອກເປັນຮູບຕ່າງໆ.
2. ການຫຼິ້ນໃນມຸມເກມການສຶກສາ: ຫຼິ້ນເກມຈັບຄູ່ຈຳນວນຮູບພາບກັບຕົວເລກ 1-3: ໄກ່ 1 ໂຕ ເລກ 1, ໝູ 2 ໂຕ ເລກ 2, ເສືອ 3 ໂຕ, ເລກ 3.

### III. ສື່ການຮຽນ-ການສອນ

1. ອ່າງຊາຍ ແລະ ບ້ອກກ້ອນແປ.
2. ເກມຈັບຄູ່ຈຳນວນຮູບພາບກັບຕົວເລກ 1-3: ໄກ່ 1 ໂຕ ເລກ 1, ໝູ 2 ໂຕ ເລກ 2, ເສືອ 3 ໂຕ ເລກ 3.
3. ບັດເຂົ້າມຸມຫຼິ້ນ.
4. ບົດຄຳຄ່ອງ ປະໂຫຍດຂອງຫີນ, ດິນ, ຊາຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ປະໂຫຍດຂອງຫີນ, ດິນ, ຊາຍ.
2. ຄູ ແນະນຳວິທີຫຼິ້ນຕາມມຸມ ເຄື່ອງຫຼິ້ນສຳຜັດ, ມຸມເກມການສຶກສາ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.

# ຈຸດປະສົງສຳລັບອາທິດທີ 2

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຄຳສັ່ງ ຖອກດິນ ແລະ ຊວ້ານຫີນ ຖືກຕ້ອງ ແລະ ມ່ວນຊື່ນ.
2. ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ ຊ້າງກິນໃບໄມ້, ຊ້າງແກ່ໄມ້ ຢ່າງມ່ວນຊື່ນ.
3. ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ປະໂຫຍດດິນ, ຫີນ, ຊາຍ ຢ່າງມ່ວນຊື່ນ.
4. ເຮັດທ່າທາງຕາມຈັງຫວະເພງ ຢ່າຖິ້ມ ຢ່າງມ່ວນຊື່ນ.
5. ເຮັດທ່າທາງຕາມຂໍ້ຕົກລົງ ເຄາະຄ່ອຍເຮັດທ່າທາງຫວ່ານເຂົ້າໃຫ້ໄກ່, ເຄາະແຮງເຮັດທ່າທາງ ຫົດນ້ຳດອກໄມ້ ຖືກຕ້ອງ ແລະ ມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ຟັງການເລົ່າເລື່ອງດ້ວຍຄວາມມ່ວນຊື່ນ.
2. ບອກການບົວລະບັດຮັກສາພືດ ແລະ ສັດ.
3. ເວົ້າເປັນຄຳຕາມຮູບພາບ: ໄກ່, ໝູ, ຊ້າງ.
4. ຮ້ອງເພງ ຢ່າຖິ້ມ ປະກອບທ່າທາງ.
5. ບອກການປົກປັກຮັກສານ້ຳ, ອາກາດ, ດິນ, ຫີນ ແລະ ຊາຍ.
6. ບອກຕົວເລກ 3 ແລະ ຄ່າຈຳນວນແຕ່ 1- 3.
7. ຕໍ່ພື້ນຂອງຮູບສາມແຈຕິດກັນ 2 ຮູບ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ປັ້ນດິນເປັນຮູບຫງ່າໄມ້.
2. ຂີດເສັ້ນວົງມົນ ຂວາ ຫາ ຊ້າຍ ຕາມຮອຍຈ້ຳຖືກຕ້ອງ.
3. ຕິດຮູບພາບ ດອກໄມ້ຖືກຕ້ອງ.
4. ຂີດຂຽນຕາມຮອຍຈ້ຳຕົວ ເລກ 8 ຖືກຕ້ອງ.
5. ຂີດເສັ້ນວົງມົນ ຂວາ ຫາ ຊ້າຍ ແລະ ຊ້າຍ ຫາ ຂວາ ຖືກຕ້ອງ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນປະດິດສ້າງ ເກັບໃບໄມ້ໃສ່ກະຕ່າ, ຕາກເຄື່ອງ ຢ່າງມ່ວນຊື່ນ ແລະ ປອດໄພ
2. ຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ
3. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ຕະລູດ, ໂອ້ນຊາ, ເດື່ອງດ່າງ, ກົງລໍດ ຢ່າງມ່ວນຊື່ນ ແລະ ປອດໄພ
4. ຫຼິ້ນນ້ຳ, ຫຼິ້ນຊາຍ: ຣ່າຍນ້ຳໃສ່ແກ້ວ, ຕັກຊາຍ, ຣ່ອນຊາຍໃສ່ກະປ໋ອງ, ພິມຮູບຕ່າງໆໃສ່ອ່າງຊາຍ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ນຳຮູບພາບທີ່ຄືກັນມາຈັບຄູ່ກັນ ຮູບພາບ: ເດັກນ້ອຍຫົດນ້ຳຕົ້ນໄມ້, ໃສ່ຝຸ່ນຕົ້ນໄມ້ ແລະ ປູກຕົ້ນໄມ້, ຮູບພາບ: ແມວ, ໄກ່, ໝູ, ຮູບພາບ: ໝໍ້ດິນ, ຄົກຫີນ ແລະ ຈອກແກ້ວຖືກຕ້ອງ.
2. ຕໍ່ຮູບພາບຕາມແບບ ຮູບພາບ: ເດັກນ້ອຍປິດກ໊ອກນ້ຳ, ຮູບພາບ: ເດັກນ້ອຍເກັບຂີ້ເຫຍື້ອໃສ່ກະຖັງ ຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

### ຈຸດປະສົງ

ເພື່ອໃຫ້ເດັກສາມາດ :

1. ຫຼິ້ນໃນມຸມວິທະຍາສາດ ແລະ ທຳມະຊາດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
4. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.
5. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຄຳສັ່ງ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຄຳສັ່ງຖືກຕ້ອງ ແລະ ມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຄຳສັ່ງ ຖອກດິນ ແລະ ຊວ້ານຫີນ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານທ້ອງ ແລະ ຫຼັງ (ປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານທ້ອງ ແລະ ຫຼັງ.
2. ໃຫ້ເດັກຍ່າງ ແລະ ແລ່ນຕາມບາດເຄາະ ຊ້າ, ໄວ.
3. ຄູສາທິດການເຮັດທ່າທາງຕາມຄຳສັ່ງ: ຖອກດິນ ແລະ ຊວ້ນຫີນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງເອົາມືວາງໄວ້ຂາ ແລະ ຫຼັບຕາ ( ນັ່ງສາມະທິ ).
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາຍ່າງ, ແລ່ນ ແລະ ເຮັດທ່າທາງຕາມຄຳສັ່ງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຄຳສັ່ງ ຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ບົວລະບັດຮັກສາພືດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຟັງເລົ່າເລື່ອງດ້ວຍຄວາມມ່ວນຊື່ນ.
2. ບອກການບົວລະບັດຮັກສາພືດ.

## II. ເນື້ອໃນຕົ້ນຕໍ

1. ການຟັງເລົ່າເລື່ອງ ຕົ້ນໄມ້ປາກເປັນ.
2. ການບົວລະບັດຮັກສາພືດ: ຫົດນ້ຳ, ໃສ່ຝຸ່ນ, ບໍ່ຕັດຕົ້ນໄມ້ ແລະ ບໍ່ເດັດໃບໄມ້, ດອກໄມ້.

## III. ສື່ການຮຽນ-ການສອນ

1. ຮູບພາບ: ເດັກນ້ອຍຫົດນ້ຳຕົ້ນໄມ້, ໃສ່ຝຸ່ນຕົ້ນໄມ້.
2. ບົດເລື່ອງ ຕົ້ນໄມ້ປາກເປັນ (ປຶ້ມຄູ່ມືຄູ).
3. ຮູບພາບປະກອບບົດເລື່ອງ ຕົ້ນໄມ້ປາກເປັນ.

## IV. ກິດຈະກຳການຮຽນ-ການສອນ

1. ສົນທະນາກັບເດັກ ກ່ຽວກັບຕົ້ນໄມ້ ແລະດອກໄມ້ທີ່ເດັກຮູ້ຈັກ.
2. ຄູເລົ່າເລື່ອງ ຕົ້ນໄມ້ປາກເປັນ ແລະ ສົນທະນາກັບເດັກ ກ່ຽວກັບເນື້ອໃນຂອງເລື່ອງ
3. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບ ການບົວລະບັດຮັກສາພືດ.
4. ໃຫ້ເດັກບອກການບົວລະບັດຮັກສາພືດ.
5. ໃຫ້ເດັກເວົ້າຄືນກ່ຽວກັບການບົວລະບັດຮັກສາພືດ.
6. ສຶກສາອົບຮົມເດັກກ່ຽວກັບການຮັກສາດອກໄມ້: ບໍ່ເດັດດອກໄມ້, ຫົດນ້ຳດອກໄມ້.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຟັງເລົ່າເລື່ອງດ້ວຍຄວາມມ່ວນຊື່ນ.
ເພື່ອໃຫ້ເດັກສາມາດ:

1. ບອກປະໂຫຍດຂອງຕະຫຼາດ ແລະ ຖະໜົນ.
2. ເວົ້າເປັນຄຳຕາມຮູບພາບ: ຈົວ, ຖະໜົນ.

### II. ເນື້ອໃນຕົ້ນຕໍ

1. ປະໂຫຍດຂອງຕະຫຼາດ: ເປັນບ່ອນຊື້ຂາຍ, ຖະໜົນ ເປັນເສັ້ນທາງໄປມາຫາສູ່ເຊິ່ງກັນ ແລະ ກັນ.
2. ການເວົ້າເປັນຄຳຕາມຮູບພາບ: ຈົວ ແລະ ຖະໜົນ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ຕະຫຼາດ ແລະ ຖະໜົນ.
2. ກ້ອນຫີນ 6 ກ້ອນ.
3. ຮູບພາບ: ຈົວ ແລະ ຖະໜົນ.
4. ບັດເລກ 3.

### IV. ກິດຈະກຳການຮຽນ-ການສອນ

1. ຄູ ສົນທະນາກັບເດັກກ່ຽວກັບປະໂຫຍດຂອງສວນສາທາລະນະ.
2. ໃຫ້ເດັກບອກຕົວເລກ 3 ແລະ ຄ່າຈຳນວນ 1-3 ດ້ວຍກ້ອນຫີນ.
3. ໃຫ້ເດັກສັງເກດຮູບພາບ, ຄູສົນທະນາກັບເດັກກ່ຽວກັບ ປະໂຫຍດຂອງຕະຫຼາດ, ຖະໜົນ ແລະ ເດັກບອກປະໂຫຍດຂອງຕະຫຼາດ ແລະ ຖະໜົນ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ຈົວ ແລະ ຖະໜົນ.
5. ໃຫ້ເດັກເວົ້າຄືນປະໂຫຍດຂອງຕະຫຼາດ, ຖະໜົນ ແລະ ເວົ້າເປັນຄຳຕາມຮູບພາບ.
6. ສຶກສາອົບຮົມເດັກກ່ຽວກັບການຮັກສາຕະຫຼາດ ແລະ ຖະໜົນ: ບໍ່ຖິ້ມຂີ້ເຫຍື້ອໃສ່ຕະຫຼາດ ແລະ ຖະໜົນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກປະໂຫຍດຂອງຕະຫຼາດ ແລະ ຖະໜົນ.
2. ການເວົ້າເປັນຄຳຕາມຮູບພາບ: ຈົວ ແລະ ຖະໜົນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຕັດ ແລະ ຕິດເຈ້ຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕັດເຈ້ຍເປັນຮູບວົງມົນ, ສາມແຈ, ສີ່ແຈ ຕາມຮອຍຈ້ຳ ແລະ ຕິດເຈ້ຍຮູບວົງມົນ, ສາມແຈ ແລະ ສີ່ແຈ ເປັນຮູບສຳເລັດຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຕັດເຈ້ຍເປັນຮູບວົງມົນ, ສາມແຈ, ສີ່ແຈ ຕາມຮອຍຈ້ຳ ແລະ ຕິດເຈ້ຍຮູບວົງມົນ, ສາມແຈ ແລະ ສີ່ແຈ ເປັນຮູບສຳເລັດ.

### III. ສື່ການຮຽນ-ການສອນ

1. ເຈ້ຍວົງມົນ, ສີ່ແຈ, ສາມແຈ.
2. ກາວ, ມີດຕັດ ໄມ້ທາກາວ ຫຼື ກາວເຂົ້າໜຽວຕົ້ມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຕັດເຈ້ຍຢູ່ກາງຫາວ.
2. ຄູແນະນຳ ວິທີຕັດ, ຕິດເຈ້ຍ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ ແລະ ເກັບມ້ຽນອຸປະກອນໄວ້ເປັນລະບຽບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມເອົາໃຈໃສ່ໃນການຕັດ ແລະ ຕິດເຈ້ຍ.
2. ຄວາມສາມັກຄີ ແລະ ຄວາມປອດໄພໃນການຕັດ ແລະ ຕິດ.
3. ຄວາມຖືກຕ້ອງຂອງການຕັດ ແລະ ຕິດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ລູລີ່ເຂົ້າສານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ລູ່ລີ່ເຂົ້າສານ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ລູ່ລີ່ເຂົ້າສານ ແລະ ວິທີຫຼິ້ນ (ປຶ້ມຄູ່ມືຄູ).
2. ບົດຄຳຄ່ອງ ລະດູໜາວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກລຽນແຖວ ເລົ່າຄຳຄ່ອງ ລະດູໜາວ.
2. ຄູ ແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.
5. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາຫຼິ້ນແບບຫຼິ້ນ ລູ່ລີ່ເຂົ້າສານ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫິ້ນ ພື້ນເມືອງ ລູ່ລີ່ເຂົ້າສານ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ຄົນຂາຍເຄື່ອງ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ຄົນຂາຍເຄື່ອງ.
2. ເກມເກົ່າ ເກມຈັບຄູ່ຮູບພາບທີ່ຄືກັນ: ເດັກນ້ອຍເກັບຂີ້ເຫຍື້ອໃສ່ກະຖັງ, ຫົດນ້ຳດອກໄມ້ ແລະ ປັດກວາດສວນສາທາລະນະ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບ ປະໂຫຍດຂອງຕະຫຼາດ.
2. ຄູສະເໜີຊື່ເກມ.
3. ຄູສາທິດທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີ ກັບ ໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຕີກອງ, ຕົບແສ່ງ ແລະ ຕີລະນາດ.
2. ການຫຼິ້ນໃນມຸມສິລະປະສ້າງສັນ: ຕັດເຈ້ຍເປັນຮູບວົງມົນ, ສາມແຈ, ສີ່ແຈ ຕາມຮອຍຈ້ຳ.

### III. ສື່ການຮຽນ-ການສອນ

1. ກອງ, ແສ່ງ, ລະນາດ.
2. ບັດເຂົ້າມຸມຫຼິ້ນ.
3. ບົດເພງ ສາຍນ້ຳໄຫຼ.
4. ເຈ້ຍຮູບວົງມົນ, ສາມແຈ, ສີ່ແຈ ມີດຕັດ, ໄມ້ທາກາວ ແລະ ກາວ ຫຼື ກາວເຂົ້າໜຽວຕົ້ມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສາຍນ້ຳໄຫຼ.
2. ຄູແນະນຳວິທີຫຼິ້ນຕາມມຸມ ເຄື່ອງຫຼິ້ນສຳຜັດ, ມຸມສິລະປະສ້າງສັນ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ  ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນ ສຳຜັດຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງເປັນຜູ້ນຳ, ຜູ້ຕາມຢ່າງມ່ວນຊື່ນ

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ເກັບຂີ້ເຫຍື້ອຕາມແຄມຖະໜົນ ແລະ ປັດກວາດເດີ່ນ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຂາ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂາ.
2. ໃຫ້ເດັກຍ່າງຕົບມືໃນບໍລິເວນຫ້ອງ.
3. ຄູສາທິດການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ: ເກັບຂີ້ເຫຍື້ອຕາມແຄມຖະໜົນ ແລະ ປັດກວາດເດີ່ນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຢືນເບັດຕົວໄປຂ້າງຊ້າຍ, ຂວາຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງເປັນຜູ້ນຳ, ຜູ້ຕາມ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງເປັນຜູ້ນຳ, ຜູ້ຕາມຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ໂຮງໝໍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກປະໂຫຍດຂອງໂຮງໝໍ.
2. ບອກຮູບເລຂາຄະນິດ: ຈະຕຸລັດ ແລະ ຕໍ່ຮູບຈະຕຸລັດ 6 ຮູບລຽນກັນ.

### II. ເນື້ອໃນຕົ້ນຕໍ

1. ປະໂຫຍດຂອງໂຮງໝໍ: ເປັນບ່ອນປິ່ນປົວຄົນເຈັບ ແລະ ກວດສຸຂະພາບ.
2. ຮູບເລຂາຄະນິດ: ຈະຕຸລັດ ແລະ ຕໍ່ຮູບຈະຕຸລັດ 6 ຮູບລຽນກັນ.

### III. ສື່ການຮຽນ-ການສອນ

1. ຮູບພາບ: ທ່ານໝໍກວດຄົນເຈັບ.
2. ບົດຄຳຄ່ອງ ປະໂຫຍດຂອງ ດິນ, ຫີນ, ຊາຍ.
3. ບູ້ອກຈະຕຸລັດ 6 ອັນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ປະໂຫຍດຂອງ ດິນ, ຫີນ, ຊາຍ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບ ປະໂຫຍດຂອງໂຮງໝໍ.
3. ໃຫ້ເດັກບອກຮູບເລຂາຄະນິດ: ຈະຕຸລັດ ແລະ ຕໍ່ຮູບຈະຕຸລັດ 6 ຮູບລຽນກັນ.
4. ໃຫ້ເດັກເວົ້າຄືນກ່ຽວກັບປະໂຫຍດຂອງໂຮງໝໍ ແລະ ບອກຮູບເລຂາຄະນິດ: ຈະຕຸລັດ ແລະ ຕໍ່ຮູບຈະຕຸລັດ 6 ຮູບລຽນກັນ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມກ້າຫານ ໄປໂຮງໝໍບໍ່ໃຫ້ ແລະ ບໍ່ຢ້ານທ່ານໝໍ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກປະໂຫຍດຂອງໂຮງໝໍ.
2. ການບອກຮູບເລຂາຄະນິດ: ຈະຕຸລັດ ແລະ ຕໍ່ຮູບຈະຕຸລັດ 6 ຮູບລຽນກັນ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດຂຽນຕົວເລກ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດຂຽນຕາມຮອຍຈ້ຳ ຕົວເລກ 8.

### II. ເນື້ອໃນຕົ້ນຕໍ

ການຂີດຂຽນຕາມຮອຍຈ້ຳ ຕົວເກລກ 8.

### III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດລະນິດສາດ ເຫຼັ້ມ 2 ຫຼື ເຈ້ຍແບບຂີດຂຽນຕາມຮອຍຈ້ຳຕົວເລກ 8.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນັບເລກປາກເປົ່າ 1-8.
2. ຄູແນະນຳ ວິທີຂຽນເລກ 8 ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຂີດຂຽນຕາມຮອຍຈ້ຳຕົວເລກ 8.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ບໍ່ຂີດສໍໃສ່ກັນ ແລະ ເກັບມ້ຽນອຸປະກອນເປັນລະບຽບ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດຂຽນຕາມຮອຍຈ້ຳ ຕົວເກລກ 8.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ປັກທຸງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ປັກທຸງ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ປັກທຸງ.

### III. ສື່ການຮຽນ-ການສອນ

1. ທຸງ ແລະ ກະປ໋ອງ.
2. ເຄື່ອງເຄາະຈັງຫວະ.
3. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກລຽນແຖວ ຢ່າງເປັນຈັງຫວະຕາມບາດເຄາະ ຊ້າ, ໄວ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ປັກທຸງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ປັກທຸງ.
5. ສຶກສາອົບຮົມເດັກໃນເວລາຫຼິ້ນແບບຫຼິ້ນ ປັກທຸງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ປັກທຸງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້:  ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ຄົນອະນາໄມໂຮງໝໍ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ຄົນອະນາໄມໂຮງໝໍ.
2. ເກມເກົ່າ ເກມຕໍ່ຮູບພາບ ຄົນຂາຍເຄື່ອງ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການໄປໂຮງໝໍ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ  ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຕໍ່ຮູບພາບຕາມແບບ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມອ່ານ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຕໍ່ບັ້ອກເປັນຮູບຮ່າງຕ່າງໆຕາມໃຈ.
2. ການຫຼິ້ນໃນມຸມອ່ານ: ເປີດປື້ມ, ອ່ານຮູບພາບໃນປື້ມເລື່ອງ ແລະ ໂປສະເຕີ.

### III. ສື່ການຮຽນ-ການສອນ

1. ບັ້ອກສາມແຈ, ສີ່ແຈ ແລະ ວົງມົນ.
2. ປື້ມຮູບໃນບົດເລື່ອງ, ໂປສະເຕີກ່ຽວກັບການຮັກສາສຸຂະພາບ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຕົບມື ແລະ ນັບເລກ 1-7.
2. ຄູແນະນຳວິທີຫຼິ້ນຕາມມຸມ, ເຄື່ອງຫຼິ້ນສຳຜັດ, ມຸມອ່ານ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ ຢ່າງມ່ວນຊື່ນ .
2. ການຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.

# ຈຸດປະສົງສຳລັບອາທິດທີ 4

## ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

ເພື່ອໃຫ້ເດັກສາມາດ:

1. ເຮັດທ່າທາງຕາມຈັງຫວະເພງ ຢ່າງຖືກ ຢ່າງມ່ວນຊື່ນ.
2. ເຮັດທ່າທາງຕາມຄຳສັ່ງ ກົບຮ້ອງ ແລະ ເປັດຢ່າງຖືກຕ້ອງ ແລະ ມ່ວນຊື່ນ.
3. ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າພໍ່ ແມ່ຂັບລົດພາລູກໄປຕະຫຼາດ, ຊື້ອາຫານ ແລະ ກັບບ້ານມາແຕ່ງກິນ ຢ່າງມ່ວນຊື່ນ.
4. ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ເດັກດີ ຢ່າງມ່ວນຊື່ນ.
5. ເຮັດທ່າທາງຕາມຂໍ້ຕົກລົງ ເຄາະ 1 ບາດ ເຮັດທ່າທາງຫົດນ້ຳດອກໄມ້, ເຄາະ 2 ບາດ ເຮັດທ່າທາງເກັບໃບ ໄມ້ໃສ່ກະຕ່າ ແລະ ເຄາະ 3 ບາດ ເຮັດທ່າທາງປັດກວາດເດີ່ນ ຖືກຕ້ອງ ແລະ ມ່ວນຊື່ນ.

## ກິດຈະກຳວົງມົນ

ເພື່ອໃຫ້ເດັກສາມາດ:

1. ບອກການປົກປັກຮັກສາວັດ, ສວນສາທາລະນະ, ຕະຫຼາດ, ຖະໜົນ ແລະ ໂຮງໝໍ.
2. ປຽບທຽບຈຳນວນເທົ່າກັນ ບໍ່ເທົ່າກັນ 1-3.
3. ເລົ່າຄຳຄ່ອງ ເດັກດີ ປະກອບທ່າທາງ.
4. ເວົ້າເປັນຄຳຕາມຮູບພາບ ເສືອ ແລະ ກົບ.
5. ປຽບທຽບໜັກ, ເບົາ.
6. ຮວມກຸ່ມຈຳນວນ 1-3 ຂອງໄມ້ບູ້ອກ.

## ກິດຈະກຳສິລະປະສ້າງສັນ

ເພື່ອໃຫ້ເດັກສາມາດ:

1. ພັບເຈ້ຍເປັນຮູບສາມແຈ ແລະ ສີ່ແຈຖືກຕ້ອງ.
2. ຕັດຈ້ຍເປັນຮູບຈະຕຸລັດຕາມແບບຖືກຕ້ອງ.
3. ຂີດເສັ້ນ ຫົວ ຕົວ ບ ຕາມຮອຍຈ້ຳ ແຕ່ ຂວາ ຫາ ຊ້າຍຖືກຕ້ອງ.
4. ຕິດເຈ້ຍມຸ່ນໃສ່ຮູບພາບ ວົງມົນຖືກຕ້ອງ.
5. ຂີດເສັ້ນຫົວຕົວ ປ ຕາມຮອຍຈ້ຳ ແຕ່ຂວາ ຫາ ຊ້າຍຖືກຕ້ອງ.

## ກິດຈະກຳການຫຼິ້ນກາງແຈ້ງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນແບບຫຼິ້ນ ປະດິດສ້າງ ລຳວົງຍາດຕັ່ງ, ສົ່ງດອກໄມ້ ຢ່າງມ່ວນຊື່ນ ແລະ ປອດໄພ.
2. ຫຼິ້ນເຄື່ອງຫຼິ້ນໃນເດີ່ນ: ຕະລູດ, ເດື່ອງດ່ງ, ກົງລົດ ຢ່າງມ່ວນຊື່ນ ແລະ ປອກໄພ,
3. ຫຼິ້ນນ້ຳ, ຫຼິ້ນຊາຍ: ຣ່າຍນ້ຳໃສ່ແກ້ວ, ພິມຝາມືໃສ່ອ່າງຊາຍ, ຜອງຊາຍ ຢ່າງມ່ວນຊື່ນ ແລະ ປອດໄພ.
4. ຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

## ກິດຈະກຳເກມການສຶກສາ

ເພື່ອໃຫ້ເດັກສາມາດ:

1. ຕໍ່ຮູບພາບຕາມແບບ ຮູບພາບ: ຄົນອະນາໄມເດີ່ນວັດ, ຮູບພາບ: ຄົນອະນາໄມຕະຫຼາດ, ຮູບພາບ: ລົດແລ່ນຕາມຖະໜົນຖືກຕ້ອງ.
2. ຈັດໝວດໝູ່ຮູບພາບ: ໂອ້ນຊາ, ຕະລູດ, ກົງລອດຖືກຕ້ອງ.
3. ນຳຮູບພາບມາຈັບຄູ່ກັນກັບພະຍັນຊະນະ ງົວ ງ, ຂຽດ ຂ, ຖະໜົນ ຖ ແລະ ຈົວ ຈ ຖືກຕ້ອງ.

## ກິດຈະກຳການຫຼິ້ນຕາມມຸມ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ .
2. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.
3. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
4. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.
5. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈັງຫວະ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈັງຫວະເພງຢ່າຖິ້ມ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດເພງ ຢ່າຖິ້ມ.
3. ການບໍລິຫານຄໍ (ປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຄໍ.
2. ໃຫ້ເດັກວາແຂນຍ່າງຕາມເສັ້ນຊື່.
3. ຄູແນະນຳການເຮັດທ່າທາງຕາມຈັງຫວະເພງ ຢ່າຖິ້ມ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງ ຢຽດຂາຊື່ກົ້ມຫົວລົງ ແລະ ເງີຍຫົວຂຶ້ນຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຈັງຫວະເພງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈັງຫວະເພງ ຢ່າງມ່ວນຊື່ນ.

# ກິດຈະກຳໃນວົງມົນ

## ຫົວຂໍ້: ວັດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປົກປັກຮັກສາວັດ.
2. ປຽບທຽບຈຳນວນເທົ່າກັນ ບໍ່ເທົ່າກັນ 1-3.

### II. ເນື້ອໃນຕົ້ນຕໍ

1. ການປົກປັກຮັກສາວັດ: ບໍ່ມ້າງເພທຳລາຍ, ບໍ່ຂີດ ແລະ ບໍ່ເຮັດເປິເປື້ອນໃສ່ຕາມກຳແພງວັດ.
2. ການປຽບທຽບຈຳນວນກ້ອນຫີນສອງກອງເທົ່າກັນ ແລະ ທີ່ບໍ່ເທົ່າກັນຂອງຈຳນວນ 1-3.

### III. ສື່ການຮຽນ-ການສອນ

- ຮູບພາບການປົກປັກຮັກສາ ວັດ

1. ກ້ອນຫີນ 7 ກ້ອນ.
2. ຮູບພາບ ການອະນາໄມ ວັດ.
3. ບົດລຳຄ່ອງ ລະດູໜາວ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າລຳຄ່ອງ ລະດູໜາວ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບການປົກປັກຮັກສາວັດ.
3. ໃຫ້ເດັກບອກການປົກປັກຮັກສາວັດ.
4. ໃຫ້ເດັກປຽບທຽບຈຳນວນກອງຫີນເທົ່າກັນ ແລະ ບໍ່ເທົ່າກັນ 1-3.
5. ໃຫ້ເດັກເວົ້າຄືນກ່ຽວກັບການປົກປັກຮັກສາວັດ, ປຽບທຽບຈຳນວນກອງຫີນເທົ່າກັນ ແລະ ບໍ່ເທົ່າກັນ 1-3.
6. ສຶກສາອົບຮົມເດັກ ກ່ຽວກັບການປັກປັກຮັກສາວັດ: ບໍ່ຖິ້ມຂີ້ເຫຍື້ອໃສ່ວັດ ແລະ ບໍ່ແຕ້ມຝາວັດ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການປົກປັກຮັກສາວັດ.
2. ການປຽບທຽບຈຳນວນ ເທົ່າກັນ ບໍ່ເທົ່າກັນ 1-3.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ພັບເຈ້ຍ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ພັບເຈ້ຍເປັນຮູບ ສາມແຈ ແລະ ສີ່ແຈຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການ ພັບເຈ້ຍເປັນຮູບ ສາມແຈ ແລະ ສີ່ແຈ.

## III. ສື່ການຮຽນ-ການສອນ

1. ແບບເຈ້ຍ, ສາມແຈ, ສີ່ແຈ.
2. ເຈ້ຍ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຄິດນິ້ວມື, ກຳມື ແລະ ແບມື.
2. ຄູແນະນຳ, ສາທິດວິທີພັບເຈ້ຍ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການພັບເຈ້ຍເປັນຮູບ ສາມແຈ ແລະ ສີ່ແຈ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ລຳວົງຍາດຕັ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ລຳວົງຍາດຕັ່ງ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ລຳວົງຍາດຕັ່ງ.

### III. ສື່ການຮຽນ-ການສອນ

1. ຕັ່ງ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).
3. ບົດເພງ ຢ່າຖິ້ມ ຫຼື ເພງອື່ນທີ່ໄດ້ຮຽນຜ່ານມາ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງ ແລະ ແລ່ນຊ້າໆ.
2. ຄູ ແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ລຳວົງຍາດຕັ່ງ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ລຳວົງຍາດຕັ່ງ.
5. ສຶກສາອົບຮົມເດັກໃນເວລາຫຼິ້ນແບບຫຼິ້ນ ລຳວົງຍາດຕັ່ງ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ລຳວົງຍາດຕັ່ງ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ຄົນອະນາໄມເດີ່ນວັດ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ຄົນອະນາໄມເດີ່ນວັດ.
2. ເກມເກົ່າ ເກມຕໍ່ຮູບພາບ ຄົນອະນາໄມໂຮງໝໍ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການປົກປັກຮັກສາວັດ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຖ້າ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບຕາມແບບ.
2. ຄວາມເອົາໃຈໃສ່ ແລະ ຄວາມສາມັກຄີຂອງເດັກ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມອ່ານ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ການຫຼິ້ນໃນມຸມອ່ານຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົດສົມມຸດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມອ່ານ: ເປີດປຶ້ມ ແລະ ປຶ້ມນິທານ, ໂປສະເຕີ, ຮູບສວນສາທາລະນະ, ໂຮງໝໍ ແລະ ຮູບວັດ.
2. ການຫຼິ້ນໃນມຸມບົດບາດສົມມຸດ: ຫຼິ້ນເປັນທ່ານໝໍກວດຄົນເຈັບ.

### III. ສື່ການຮຽນ-ການສອນ

1. ປຶ້ມນິທານ, ໂປສະເຕີ, ຮູບພາບສວນສາທາລະນະ, ໂຮງໝໍ, ແລະ ຮູບວັດ.
2. ເຄື່ອງມືແພດຈຳລອງ, ຕຸກກະຕາ.
3. ບັດເຂົ້າຫຼິ້ນມຸມ.
4. ບົດຄຳຄ່ອງ ປະໂຫຍດຂອງດິນ, ຫີນ, ຊາຍ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ປະໂຫຍດຂອງດິນ, ຫີນ, ຊາຍ.
2. ຄູ ແນະນຳວິທີຫຼິ້ນຕາມມຸມອ່ານ, ມຸມບົດບາດສົມມຸດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າມຸມຫຼິ້ນ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມອ່ານ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົດສົມມຸດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຄຳສັ່ງ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຄຳສັ່ງຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຄຳສັ່ງ: ກົບຮ້ອງ ແລະ ເປັດຍ່າງ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານແອວ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານແອວ.
2. ໃຫ້ເດັກຕັ້ງຂາດຽວໃນບໍລິເວນຫ້ອງ.
3. ຄູສາທິດການເຮັດທ່າທາງຕາມຄຳສັ່ງ: ກົບຮ້ອງ ແລະ ເປັດຍ່າງ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກນັ່ງລົງເອົາມືວາງໄວ້ເທິງຕັກແລ້ວ ຫາຍໃຈອອກ, ເຂົ້າຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຄຳສັ່ງ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຄຳສັ່ງຖືກຕ້ອງ ແລະ ມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ສວນສາທາລະນະ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ເລົ່າຄຳຄ່ອງ ເດັກດີ ປະກອບທ່າທາງ.
2. ບອກການປົກປັກຮັກສາສວນສາທາລະນະ.

## II. ເນື້ອໃນຕົ້ນຕໍ

1. ການເລົ່າຄຳຄ່ອງ ເດັກດີ ປະກອບທ່າທາງ.
2. ການປົກປັກຮັກສາສວນສາທາລະນະ ບໍ່ຖິ້ມຂີ້ເຫຍື້ອ ແລະ ບໍ່ມ້າງເພ ທຳລາຍ ເຄື່ອງຫຼິ້ນໃນສວນສາທາລະນະ.

## III. ສື່ການຮຽນ-ການສອນ

1. ຮູບພາບ ເດັກເກັບຂີ້ເຫຍື້ອໃສ່ກະຖັງໃນສວນສາທາລະນະ.
2. ບົດຄຳຄ່ອງ ເດັກດີ (ປື້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການເປັນເດັກຄຳຮູ້.
2. ໃຫ້ເດັກເລົ່າຄຳຄ່ອງ ເດັກດີ ປະກອບທ່າທາງ ແລະ ຄູສົນທະນາກັບເດັກ ກ່ຽວກັບເນື້ອໃນຄຳຄ່ອງ.
3. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບການປົກປັກຮັກສາສວນສາທາລະນະ.
4. ໃຫ້ເດັກບອກການປົກປັກຮັກສາ ສວນສາທາລະນະ.
5. ໃຫ້ເດັກເວົ້າຄືນກ່ຽວກັບການປົກປັກຮັກສາສວນສາທາລະນະ ແລະ ເລົ່າຄຳຄ່ອງ.
6. ສຶກສາອົບຮົມເດັກກ່ຽວກັບ ການປົກປັກຮັກສາສວນສາທາລະນະ: ບໍ່ຖິ້ມຂີ້ເຫຍື້ອ, ບໍ່ເດັດດອກໄມ້ ແລະ ບໍ່ຖິ່ມນ້ຳລາຍໃສ່ສວນສາທາລະນະ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການເລົ່າຄຳຄ່ອງ ເດັກດີ ປະກອບທ່າທາງ.
2. ການບອກການປົກປັກຮັກສາສວນສາທາລະນະ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ການຕັດເຈ້ຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕັດເຈ້ຍຕາມຮອຍຈ້ຳເປັນຮູບຈະຕຸລັດຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຕັດເຈ້ຍຕາມຮອຍຈ້ຳເປັນຮູບຈະຕຸລັດຕາມແບບຈຳນວນ 6 ຮູບ.

### III. ສື່ການຮຽນ-ການສອນ

ເຈ້ຍແບບຮູບຈັດຕຸລັດ ແລະ ມີດຕັດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຕັດເຈ້ຍຢູ່ກາງຫາວ.
2. ຄູແນະນຳ, ສາທິດວິທີຕັດເຈ້ຍ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມ ຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົບທົນ, ລະວັງໃນການໃຊ້ມີດຕັດ ແລະ ການເກັບມ້ຽນ ອຸປະກອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມເອົາໃຈໃສ່ໃນການຕັດເຈ້ຍເປັນຮູບຈະຕຸລັດຕາມແບບ.
2. ຄວາມສາມັກຄີ ແລະ ຄວາມປອດໄພໃນການຕັດ.
3. ຄວາມຖືກຕ້ອງຂອງການຕັດເຈ້ຍ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້:  ແບບຫຼິ້ນ ສິ່ງດອກໄມ້

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນແບບຫຼິ້ນປະດິດສ້າງ ສິ່ງດອກໄມ້ ຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນປະດິດສ້າງ ສິ່ງດອກໄມ້.

### III. ສື່ການຮຽນ-ການສອນ

1. ດອກໄມ້.
2. ວິທີຫຼິ້ນ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເບັດແອວໄປທາງເບື້ອງຊ້າຍ ແລະ ເບື້ອງຂວາ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ສິ່ງດອກໄມ້.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ສິ່ງດອກໄມ້.
5. ສຶກສາອົບຮົມເດັກໃນເວລາຫຼິ້ນແບບຫຼິ້ນ ສິ່ງດອກໄມ້ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນປະດິດສ້າງ ສິ່ງດອກໄມ້ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້:  ເກມຈັບພວດໝູ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຈັດພວດໝູ່ຮູບພາບ, ໂອ້ນຊາ, ຕະລູດ, ກົງລອດຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຈັດພວດໝູ່ຮູບພາບ: ໂອ້ນຊາ, ຕະລູດ ແລະ ກົງລອດ.

### III. ສື່ການຮຽນ-ການສອນ

1. ບົດຄຳຄ່ອງ ເດັກດີ
2. ເກມຈັດພວດໝູ່ຮູບພາບ: ໂອ້ນຊາ, ຕະລູດ ແລະ ກົງລອດ.
3. ເກມເກົ່າ ເກມຕໍ່ຮູບພາບ ຄົນອະນາໄມເດີ່ນວັດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ: ເດັກດີ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຈັບຄູ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງຂອງການຈັດພວດໝູ່ຮູບພາບ.
2. ຄວາມພະຍາຍາມຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມສິລະປະສ້າງສັນ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມສິລະປະສ້າງສັນຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມສິລະປະສ້າງສັນ: ຕັດເຈ້ຍ ເປັນຮູບຈະຕຸລັດຕາມຮອຍຈ້ຳ ຕາມແບບຈຳນວນ 6 ຮູບ.
2. ການຫຼິ້ນໃນມຸມບົດບາດສົມມຸດ: ຫຼິ້ນເປັນພໍ່ຄ້າ, ແມ່ຄ້າຂາຍເຄື່ອງຫຼິ້ນ, ເຄື່ອງໃຊ້.

### III. ສື່ການຮຽນ-ການສອນ

1. ເຈ້ຍ ແບບຮູບຈະຕຸລັດ ແລະ ມີດຕັດ.
2. ກ່ອງນົມເປົ່າ, ປ໋ອງແປ້ງ, ເຄື່ອງຫຼິ້ນຂອງເຮືອນນ້ອຍ ຫຼື ເຄື່ອງຫຼິ້ນ, ເຄື່ອງໃຊ້ທີ່ມີໃນທ້ອງຖິ່ນ.
3. ບັດເຂົ້າມຸມຫຼິ້ນ.
4. ບົດຄຳຄ່ອງ ເດັກດີ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເດັກດີ.
2. ຄູແນະນຳວິທີຫຼິ້ນຕາມມຸມ ສິລະປະສ້າງສັນ, ມຸມບົດບາດສົມມຸດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນ ເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມສິລະປະສ້າງສັນ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

# ກິດຈະກຳເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ ພໍ່ແມ່ຂັບລົດພາລູກໄປຕະຫຼາດ ຊື້ອາຫານ ແລະ ກັບບ້ານມາແຕ່ງກິນ.

### III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານທ້ອງ ແລະ ຫຼັງ (ປຶ້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກ ບໍລິຫານທ້ອງ ແລະ ຫຼັງ.
2. ໃຫ້ເດັກແລ່ນເປັນວົງມົນຕາມບາດເຄາະຊ້າ, ໄວ.
3. ຄູສາທິດການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ຄູເລົ່າ: ພໍ່, ແມ່ຂັບລົດ ພາລູກໄປຕະຫຼາດຊື້ອາຫານ ແລະ ກັບບ້ານມາແຕ່ງກິນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງດົມດອກໄມ້.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຈິນຕະນາການ ປະກອບເລື່ອງເລົ່າ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເລື່ອງທີ່ເລົ່າຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ຕະຫຼາດ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປົກປັກຮັກສາຕະຫຼາດ.
2. ເວົ້າເປັນຄຳຕາມຮູບພາບ ເສືອ ແລະ ກົບ.

## II. ເນື້ອໃນຕົ້ນຕໍ

1. ການປົກປັກຮັກສາຕະຫຼາດ ບໍ່ຖິ້ມຂີ້ເຫຍື້ອຊະຊາຍໃສ່ຕະຫຼາດ.
2. ການເວົ້າເປັນຄຳຕາມຮູບພາບ ເສືອ ແລະ ກົບ.

## III. ສື່ການຮຽນ-ການສອນ

1. ຮູບພາບ ແມ່ຄ້າຖິ້ມຂີ້ເຫຍື່ອໃສ່ກະຕ່າຢູ່ຕະຫຼາດ.
2. ຮູບພາບ  ເສືອ ແລະ ກົບ.

## IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການໄປຕະຫຼາດ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບ ການປົກປັກຮັກສາຕະຫຼາດ.
3. ໃຫ້ເດັກບອກການປົກປັກຮັກສາຕະຫຼາດ.
4. ໃຫ້ເດັກເວົ້າເປັນຄຳຕາມຮູບພາບ: ເສືອ ແລະ ກົບ.
5. ໃຫ້ເດັກເວົ້າຄືນກ່ຽວກັບການປົກປັກຮັກສາຕະຫຼາດ ແລະ ເວົ້າເປັນຄຳຕາມຮູບພາບ.
6. ສຶກສາອົບຮົມເດັກ ກ່ຽວກັບການປົກປັກຮັກສາຕະຫຼາດ: ບໍ່ຖິ້ມຂີ້ເຫຍື້ອຊະຊາຍໃສ່ຕະຫຼາດ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການປົກປັກຮັກສາຕະຫຼາດ.
2. ການເວົ້າເປັນຄຳຕາມຮູບພາບ: ເສືອ ແລະ ກົບ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ຂີດເສັ້ນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຂີດເສັ້ນ ຫົວຕົວ ບ ຕາມຮອຍຈ້ຳ ແຕ່ຂວາ ຫາຊ້າຍຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຫົວຕົວ ບ ຕາມຮອຍຈ້ຳ ແຕ່ຂວາ ຫາຊ້າຍ.

## III. ສື່ການຮຽນ-ການສອນ

1. ສໍດຳ.
2. ປື້ມບົດເຝິກຫັດພາສາລາວ ເຫຼັ້ມທີ 2 ຫຼື ເຈ້ຍແບບຂີດເສັ້ນຫົວຕົວ ບ ຕາມຮອຍຈ້ຳ ແຕ່ຂວາ ຫາ ຊ້າຍ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກນັບເລກປາກເປົ່າ 1-5.
2. ຄູແນະນຳ ວິທີຂຽນຂີດເສັ້ນ ຫົວຕົວ ບ ຕາມຮອຍຈ້ຳ ແຕ່ຂວາ ຫາຊ້າຍ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ບໍ່ຂີດກັນ ແລະ ການເກັບມ້ຽນອຸປະກອນເປັນລະບຽບ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນ ຫົວຕົວ ບ ຕາມຮອຍຈ້ຳ ແຕ່ຂວາ ຫາຊ້າຍ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ຫຼິ້ນນ້ຳ, ຫຼິ້ນຊາຍ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນນ້ຳ, ຫຼິ້ນຊາຍ ຢ່າງມ່ວນຊື່ນ ແລະ ປອດໄພ

### II. ເນື້ອໃນຕົ້ນຕໍ

ການຫຼິ້ນນ້ຳ, ຫຼິ້ນຊາຍ: ຮ່າຍນ້ຳໃສ່ແກ້ວ, ພິມຝາມືໃສ່ອ່າງຊາຍ ແລະ ຜອງຊາຍ.

### III. ສື່ການຮຽນ-ການສອນ

1. ຄຸນ້ຳ, ອ່າງຊາຍ, ຈອກ, ບ່ວງ, ຊາມ, ຖ້ວຍ, ກະໂປະ, ກະປ໋ອງ (ນ້ອຍ, ໃຫຍ່) ແກ້ວ ຫຼື ຕຸກຢາງ.
2. ວິທີຫຼິ້ນ (ປື້ມຄູ່ມືຄູ).

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງ ແລະ ແລ່ນເປັນແຖວຊື່.
2. ຄູແນະນຳ ແລະ ສາທິດວິທີ ຫຼິ້ນນ້ຳ, ຫຼິ້ນຊາຍ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນນ້ຳ, ຫຼິ້ນຊາຍ.
5. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາຫຼິ້ນນ້ຳ, ຫຼິ້ນຊາຍ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນນ້ຳ, ຫຼິ້ນ, ຊາຍ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ຄົນອະນາໄມຕະຫຼາດ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ຄົນອະນາໄມຕະຫຼາດ.
2. ເກມເກົ່າ ເກມຈັດໝວດໝູ່ຮູບພາບ: ໂອ້ນຊາ, ຕະລູດ ແລະ ກົງລອດ.
3. ບົດເພງ ຢ່າຖິ້ມ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຢ່າຖິ້ມ.
2. ຄູສະເໜີຊື່ເກມ.
3. ຄູສາທິດວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບຕາມແບບ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເກມການສຶກສາ ຫຼິ້ນເກມຕໍ່ຮູບພາບຄົບອະນາໄມຕະຫຼາດ.
2. ການຫຼິ້ນໃນມຸມບົດບາດສົມມຸດ: ຫຼິ້ນເປັນພໍ່ຄ້າ, ແມ່ຄ້າຂາຍເຄື່ອງ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ຄົບອະນາໄມຕະຫຼາດ.
2. ຜັກ, ໝາກໄມ້ຈຳລອງ, ປ໋ອງແປ້ງເປົ່າ ແລະ ກ່ອງນົມເປົ່າ.
3. ບັດເຂົ້າມຸມຫຼິ້ນ.
4. ບົດເພງ ສັດລ້ຽງ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ສັດລ້ຽງ.
2. ຄູ ແນະນຳວິທີຫຼິ້ນຕາມມຸມເກມການສຶກສາ, ມຸມບົດບາດສົມມຸດ ແລະ ການເກັບມ້ຽນ.
3. ໃຫ້ເດັກ ເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ , ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຈິນຕະນາການ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງຢ່າງມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ເດັກດີ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ບົດຄຳຄ່ອງ ເດັກດີ.
3. ການບໍລິຫານມື (ປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານມື.
2. ໃຫ້ເດັກເຕັ້ນໄປທາງໜ້າ.
3. ຄູແນະນຳການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ເດັກດີ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເຮັດທ່າທາງນົກບິນຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາເຮັດທ່າທາງຕາມຈິນຕະນາການ ປະກອບເນື້ອໃນຄຳຄ່ອງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການເຮັດທ່າທາງຕາມຈິນຕະນາການປະກອບເນື້ອໃນຄຳຄ່ອງ ຢ່າງມ່ວນຊື່ນ.

# ກິດຈະກຳວົງມົນ

## ຫົວຂໍ້: ຖະໜົນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປົກປັກຮັກສາຖະໜົນ.
2. ປຽບທຽບ: ໜັກ, ເບົາ.

## II. ເນື້ອໃນຕົ້ນຕໍ

1. ການປົກປັກຮັກສາຖະໜົນ ບໍ່ຖິ້ມຂີ້ເຫຍື້ອໃສ່ຖະໜົນ.
2. ການປຽບທຽບ: ກ້ອນຫີນໜັກ, ເບົາ.

## III. ສື່ການຮຽນ-ການສອນ

1. ຮູບພາບ ຄົນອະນາໄມຖະໜົນ.
2. ກ້ອນຫີນ.
3. ບົດເພງ ຢ່າຖິ້ມ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຮ້ອງເພງ ຢ່າຖິ້ມ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກກ່ຽວກັບ ການປົກປັກຮັກສາຖະໜົນ.
3. ໃຫ້ເດັກບອກການປົກປັກຮັກສາຖະໜົນ.
4. ໃຫ້ເດັກປຽບທຽບ: ກ້ອນຫີນ ໜັກ, ເບົາ.
5. ໃຫ້ເດັກເວົ້າຄືນກ່ຽວກັບການປົກປັກຮັກສາຖະໜົນ ແລະ ປຽບທຽບໜັກເບົາ.
6. ສຶກສາອົບຮົມເດັກກ່ຽວກັບ ການປົກປັກຮັກສາຖະໜົນ: ບໍ່ຖິ້ມຂີ້ເຫຍື້ອໃສ່ຖະໜົນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການປົກປັກຮັກສາຖະໜົນ.
2. ການປຽບທຽບ: ໜັກ, ເບົາ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້:  ຕິດເຈ້ຍ

## I.  ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕິດເຈ້ຍມຸ່ນໃສ່ຮູບພາບວົງມົນຖືກຕ້ອງ.

## II.  ເນື້ອໃນຕົ້ນຕໍ

ການຕິດເຈ້ຍມຸ່ນໃສ່ຮູບພາບວົງມົນ.

## III.  ສື່ການຮຽນ-ການສອນ

1. ເຈ້ຍມຸ່ນ, ກາວ, ແຜ່ນຮູບພາບວົງມົນ ໄມ້ທາກາວ ຫຼື ກາວເຂົ້າໜຽວຕົ້ມ.
2. ນ້ຳລ້າງມື, ສະບູ ແລະ ຜ້າເຊັດມື.

## IV.  ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກກຳມື ແລະ ແບມື.
2. ຄູແນະນຳ, ສາທິດວິທີຕິດເຈ້ຍມຸ່ນ ໃສ່ຮູບພາບວົງມົນ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ບໍ່ຍິດກັນ ແລະ ເກັບມ້ຽນອຸປະກອນເປັນລະບຽບ

## V.  ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມເອົາໃຈໃສ່ໃນການຕິດເຈ້ຍມຸ່ນໃສ່ຮູບພາບວົງມົນ.
2. ຄວາມສາມັກຄີກັບໝູ່ເພື່ອນ.
3. ຄວາມຖືກຕ້ອງຂອງການຕິດ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ເຄື່ອງຫຼິ້ນໃນເດີ່ນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເຄື່ອງຫຼິ້ນ: ຫຼິ້ນຕະລູດ, ເຕື່ອງດ່າງ ແລະ ລອດກົງລົດ.

### III. ສື່ການຮຽນ-ການສອນ

ຕະລູດ, ເຕື່ອງດ່າງ ແລະ ກົງລົດ ຫຼື ເຄື່ອງຫຼິ້ນທີ່ມີໃນທ້ອງຖິ່ນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຈັບມືກັນເປັນຄູ່ຍ່າງລົງເດີ່ນ.
2. ຄູແນະນຳວິທີ ຫຼິ້ນຕະລູດ, ເຕື່ອງດ່າງ ແລະ ລອດກົງລົດ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕະລູດ, ເຕື່ອງດ່າງ ແລະ ລອດກົງລົດ.
5. ສຶກສາອົບຮົມເດັກໃນເວລາຫຼິ້ນຕະລູດ, ເຕື່ອງດ່າງ ແລະ ລອດກົງລົດ ຢ່າງປອດໄພ.

### V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນເຄື່ອງຫຼິ້ນໃນເດີ່ນຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຕໍ່ຮູບພາບ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຕໍ່ຮູບພາບຕາມແບບຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຕໍ່ຮູບພາບ ລົດແລ່ນຕາມຖະໜົນ.

### III. ສື່ການຮຽນ-ການສອນ

1. ເກມຕໍ່ຮູບພາບ ລົດແລ່ນຕາມຖະໜົນ.
2. ເກມເກົ່າ ເກມຕໍ່ຮູບພາບ ຄົນອະນາໄມຕະຫຼາດ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເຮັດທ່າທາງຂັບລົດ.
2. ຄູສະເໜີຊື່ເກມ.
3. ຄູແນະນຳວິທີຫຼິ້ນເກມຕໍ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຕໍ່ຮູບພາບຕາມແບບ.
2. ຄວາມເອົາໃຈໃສ່ຂອງເດັກ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເຄື່ອງຫຼິ້ນສຳຜັດ ແລະ ມຸມສິລະປະສ້າງສັນ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມສິລະສ້າງສັນຖືກຕ້ອງ ແລະ ມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເຄື່ອງຫຼິ້ນສຳຜັດ: ຕີກອງ, ຕົບແຊ່ງ ແລະ ຕີລະນາດ.
2. ການຫຼິ້ນໃນມຸມສິລະປະສ້າງສັນ: ຕິດເຈ້ຍມຸ່ນໃສ່ຮູບພາບວົງມົນ.

### III. ສື່ການຮຽນ-ການສອນ

1. ກອງ, ແສ່ງ ແລະ ລະນາດ.
2. ຮູບພາບວົງມົນ, ເຈ້ຍມຸ່ນ ກາວ ແລະ ໄມ້ທາກາວ ຫຼື ກາວເຂົ້າໜຽວຕົ້ມ.
3. ບັດເຂົ້າມຸມຫຼິ້ນ.

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກ ກ່ຽວກັບການປົກປັກຮັກສາຖະໜົນ.
2. ຄູ ແນະນຳວິທີຫຼິ້ນຕາມມຸມເຄື່ອງຫຼິ້ນສຳຜັດ, ມຸມສິລະປະສ້າງສັນ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການລໍຄອຍ, ການແບ່ງປັນ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງ ແລະ ຄວາມມີລະບຽບໃນການຫຼິ້ນ.
2. ຄວາມຖືກຕ້ອງໃນການຫຼິ້ນ.
3. ຄວາມສາມັກຄີກັບໝູ່ເພື່ອນ.

# ກິດຈະກຳການເຄື່ອນໄຫວ ແລະ ຈັງຫວະ

## ຫົວຂໍ້: ເຮັດທ່າທາງຕາມຂໍ້ຕົກລົງ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ເຮັດທ່າທາງຕາມຂໍ້ຕົກລົງຖືກຕ້ອງ ແລະ ມ່ວນຊື່ນ.

## II. ເນື້ອໃນຕົ້ນຕໍ

ການເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ເຮັດທ່າທາງຫົດນໍ້າດອກໄມ້, ເຄາະ 2 ບາດ ເຮັດທ່າທາງເກັບໃບໄມ້ໃສ່ກະຕ່າ ແລະ ເຄາະ 3 ບາດ ເຮັດທ່າທາງປັດກວາດເດີ່ນ.

## III. ສື່ການຮຽນ-ການສອນ

1. ເຄື່ອງເຄາະຈັງຫວະ.
2. ການບໍລິຫານຂາ (ປື້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກບໍລິຫານຂາ.
2. ໃຫ້ເດັກຍ່າງນຳຫຼັງກັນຕາມເສັ້ນຊື່.
3. ຄູສາທິດການເຮັດທ່າທາງຕາມຂໍ້ຕົກລົງ: ເຄາະ 1 ບາດ ເຮັດທ່າທາງຫົດນໍ້າດອກໄມ້, ເຄາະ 2 ບາດ ເຮັດທ່າທາງເກັບໃບໄມ້ໃສ່ກະຕ່າ ແລະ ເຄາະ 3 ບາດ ເຮັດທ່າທາງປັດກວາດເດີ່ນ.
4. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກຍືນເອົາມືຄໍ້າແອວ ກົ້ມລົງ, ເງີຍຂຶ້ນຊ້າໆ.
6. ໃຫ້ເດັກເວົ້າຄືນກ່ຽວກັບການເຮັດທ່າທາງທີ່ເດັກໄດ້ເຮັດ.
7. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນການເຮັດທ່າທາງຕາມຂໍ້ຕົກລົງ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ສັງເກດຄວາມກ້າຫານໃນການເຮັດທ່າທາງຕາມຂໍ້ຕົກລົງ.
2. ຄວາມເບີກບານຂອງເດັກ.
3. ຄວາມຖືກຕ້ອງຂອງການປະຕິບັດຕາມຂໍ້ຕົກລົງ.

# ກິດຈະກຳວົງມົນ

## ຫົວຂໍ້: ໂຮງໝໍ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ບອກການປົກປັກຮັກສາໂຮງໝໍ.
2. ຮວມກຸ່ມຈຳນວນ 1-3 ຂອງໄມ້ປູ້ອກ.

## II. ເນື້ອໃນຕົ້ນຕໍ

1. ການປົກປັກຮັກສາໂຮງໝໍ: ບໍ່ຖິ້ມຂີ້ເຫຍື້ອຊະຊາຍ ແລະ ບໍ່ແຕ້ມໃສ່ຝາໂຮງໝໍ.
2. ການຮວມກຸ່ມຈຳນວນ 1-3 ຂອງໄມ້ປູ້ອກ.

## III. ສື່ການຮຽນ-ການສອນ

1. ຮູບພາບ ການປົກປັກຮັກສາໂຮງໝໍ ບໍ່ຖິ້ມຂີ້ເຫຍື້ອຊະຊາຍ ແລະ ບໍ່ແຕ້ມໃສ່ຝາໂຮງໝໍ.
2. ໄມ້ປູ້ອກ.
3. ບົດຄຳຄ່ອງ ເດັກດີ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ເດັກດີ ປະກອບທ່າທາງ.
2. ໃຫ້ເດັກສັງເກດຮູບພາບ ແລະ ຄູສົນທະນາກັບເດັກ ກ່ຽວກັບການປົກປັກຮັກສາໂຮງໝໍ.
3. ໃຫ້ເດັກບອກການປົກປັກຮັກສາໂຮງໝໍ.
4. ໃຫ້ເດັກຮວມກຸ່ມຈຳນວນ 1-3 ຂອງໄມ້ປູ້ອກ.
5. ໃຫ້ເດັກເວົ້າຄືນກ່ຽວກັບ ການປົກປັກຮັກສາໂຮງໝໍ ແລະ ການຮວມກຸ່ມຈຳນວນ.
6. ສຶກສາອົບຮົມເດັກກ່ຽວກັບ ການປົກປັກຮັກສາໂຮງໝໍ: ຖິ້ມຂີ້ເຫຍື້ອຖືກບ່ອນ ແລະ ການເກັບມ້ຽນ ອຸປະກອນເປັນລະບຽບ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການບອກການປົກປັກຮັກສາໂຮງໝໍ.
2. ການຮວມກຸ່ມຈຳນວນ 1-3 ຂອງໄມ້ປູ້ອກ.

# ກິດຈະກຳສິລະປະສ້າງສັນ

## ຫົວຂໍ້: ຂີດເສັ້ນ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ຂີດເສັ້ນຫົວຕົວ ປ ຕາມຮອຍຈ້ຳ ແຕ່ຂວາ ຫາ ຊ້າຍຖືກຕ້ອງ.

## II. ເນື້ອໃນຕົ້ນຕໍ

ການຂີດເສັ້ນຫົວຕົວ ປ ຕາມຮອຍຈ້ຳ ແຕ່ຂວາ ຫາ ຊ້າຍ.

## III. ສື່ການຮຽນ-ການສອນ

1. ສໍດຳ.
2. ປຶ້ມບົດເຝິກຫັດ ພາສາລາວ ເຫຼັ້ມ 2 ຫຼື ເຈ້ຍແບບຂີດເສັ້ນຫົວຕົວ ປ ຕາມຮອຍຈ້ຳ ແຕ່ຂວາ ຫາ ຊ້າຍ.

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກກຳມື ແລະ ແບມື.
2. ຄູແນະນຳ ວິທີ ຂີດເສັ້ນຫົວຕົວ ປ ຕາມຮອຍຈ້ຳ ແຕ່ຂວາ ຫາ ຊ້າຍ ແລະ ການເກັບມ້ຽນ.
3. ໃຫ້ເດັກປະຕິບັດຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກນຳສະເໜີຜົນງານ.
5. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ບໍ່ຂີດສໍໃສ່ກັນ ແລະ ການເກັບມ້ຽນອຸປະກອນ.

## V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຂີດເສັ້ນຫົວຕົວ ປ ຕາມຮອຍຈ້ຳ ແຕ່ຂວາ ຫາ ຊ້າຍ.
2. ຄວາມພະຍາຍາມຂອງເດັກ.

# ກິດຈະກຳການຫຼິ້ນກາງແຈ້ງ

## ຫົວຂໍ້: ແບບຫຼິ້ນ ເຊື່ອງຜ້າ

## I. ຈຸດປະສົງ

ເພື່ອໃຫ້ເດັກສາມາດຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

## II. ເນື້ອໃນຕົ້ນຕໍ

ການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ.

## III. ສື່ການຮຽນ-ການສອນ

1. ຜ້າແພມົນ.
2. ບົດຄຳຄ່ອງ ເຊື່ອງຜ້າ ແລະ ວິທີຫຼິ້ນ (ປຶ້ມຄູ່ມືຄູ).

## IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກຍ່າງຕາມຫຼັງກັນເປັນວົງມົນ.
2. ຄູແນະນຳ ແລະ ສາທິດວິທີຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
3. ໃຫ້ເດັກຫຼິ້ນຕົວຈິງ ແລະ ຄູຕິດຕາມຊ່ວຍເຫຼືອ.
4. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນແບບຫຼິ້ນ ເຊື່ອງຜ້າ.
5. ສຶກສາອົບຮົມເດັກກ່ຽວກັບ ຄວາມປອດໄພໃນເວລາຫຼິ້ນແບບຫຼິ້ນ ເຊື່ອງຜ້າ.

## V. ການວັດ ແລະ ປະເມີນຜົນ

ສັງເກດ ການຫຼິ້ນແບບຫຼິ້ນພື້ນເມືອງ ເຊື່ອງຜ້າ ຢ່າງມ່ວນຊື່ນ ແລະ ປອດໄພ.

# ກິດຈະກຳເກມການສຶກສາ

## ຫົວຂໍ້: ເກມຈັບຄູ່ຮູບພາບກັບພະຍັນຊະນະ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ ນຳຮູບພາບມາຈັບຄູ່ກັບພະຍັນຊະນະຖືກຕ້ອງ.

### II. ເນື້ອໃນຕົ້ນຕໍ

ການຫຼິ້ນເກມຈັບຄູ່ຮູບພາບກັບພະຍັນຊະນະ: ງົວ ງ, ຂຽດ ຂ, ຖະໜົນ ຖ, ຈົວ ຈ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບພາບກັບພະຍັນຊະນະ: ງົວ ງ, ຂຽດ ຂ, ຖະໜົນ, ຈົວ ຈ.
2. ບົດຄຳຄ່ອງ ປະໂຫຍດຂອງ ດິນ, ຫີນ, ຊາຍ.
3. ເກມເກົ່າ ເກມຕໍ່ຮູບພາບ: ລົດແລ່ນຕາມຖະໜົນ.

### IV. ກິດຈະກຳການຮຽນ-ການສອນ

1. ໃຫ້ເດັກເລົ່າຄຳຄ່ອງ ປະໂຫຍດຂອງ ດິນ, ຫີນ, ຊາຍ.
2. ຄູສະເໜີຊື່ເກມ.
3. ຄູແນະນຳວິທີຫຼິ້ນເກມຈັບຄູ່ຮູບພາບ ແລະ ແນະນຳການເກັບມ້ຽນເກມ.
4. ໃຫ້ເດັກຫຼິ້ນເກມໃໝ່, ເກມເກົ່າ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນເກມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເກມໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ຄວາມຖືກຕ້ອງໃນການຈັບຄູ່ຮູບພາບກັບພະຍັນຊະນະ.
2. ການມີສ່ວນຮ່ວມຂອງເດັກ.

# ກິດຈະກຳການຫຼິ້ນຕາມມຸມ

## ຫົວຂໍ້: ມຸມເກມການສຶກສາ ແລະ ມຸມບົດບາດສົມມຸດ

### I. ຈຸດປະສົງ

ເພື່ອໃຫ້ເດັກສາມາດ:

1. ຫຼິ້ນໃນມຸມເກມການສຶກສາຢ່າງມ່ວນຊື່ນ.
2. ຫຼິ້ນໃນມຸມບົດບາດສົມມຸດຢ່າງມ່ວນຊື່ນ.

### II. ເນື້ອໃນຕົ້ນຕໍ

1. ການຫຼິ້ນໃນມຸມເກມການສຶກສາ: ຈັບຄູ່ຮູບພາບກັບພະຍັນຊະນະ: ງົວ ງ, ຂຽດ ຂ, ຖະໜົນ ຖ, ຈົວ ຈ.
2. ການຫຼິ້ນໃນມຸມບົດບາດສົມມຸດ ທ່ານໝໍກວດຄົນເຈັບ.

### III. ສື່ການຮຽນ-ການສອນ

1. ເກມຈັບຄູ່ຮູບກັບພະຍັນຊະນະ: ງົວ ງ, ຂຽດ ຂ, ຖະໜົນ ຖ, ຈົວ ຈ.
2. ບັດເຂົ້າຫຼິ້ນມຸມ.
3. ເຄື່ອງມືແພດຈຳລອງ ແລະ ຕຸກກະຕາ

### IV. ກິດຈະກຳການຮຽນ-ການສອນ

1. ຄູສົນທະນາກັບເດັກກ່ຽວກັບການໄປໂຮງໝໍ.
2. ຄູ ແນະນຳວິທີຫຼິ້ນຕາມມຸມເກມການສຶກສາ, ມຸມບົດບາດສົມມຸດ ແລະ ການເກັບມ້ຽນ.
3. ໃຫ້ເດັກເລືອກບັດເຂົ້າຫຼິ້ນຕາມມຸມ.
4. ໃຫ້ເດັກເຂົ້າຫຼິ້ນຕາມມຸມ ແລະ ຄູຕິດຕາມຊ່ວຍເຫຼືອ.
5. ໃຫ້ເດັກເວົ້າຄືນກ່ຽວກັບການຫຼິ້ນຕາມມຸມ.
6. ສຶກສາອົບຮົມເດັກໃຫ້ມີ ຄວາມອົດທົນ, ການແບ່ງປັນ, ການລໍຄອຍ ແລະ ການເກັບມ້ຽນເຄື່ອງຫຼິ້ນໃຫ້ຖືກບ່ອນ.

### V. ການວັດ ແລະ ປະເມີນຜົນ

ສັງເກດ:

1. ການຫຼິ້ນໃນມຸມເກມການສຶກສາ ຢ່າງມ່ວນຊື່ນ.
2. ການຫຼິ້ນໃນມຸມບົດບາດສົມມຸດ ຢ່າງມ່ວນຊື່ນ.

## ເອກະສານອ້າງອີງ


### ກິດຈະກໍາການເຄື່ອນໄຫວ ແລະ ຈັງຫວະ

1. ປຶ້ມຄູ່ມືການຈັດກິດຈະກໍາການສອນຊັ້ນອະນຸບານ ກະຊວງສຶກສາທິການ, ກົມສາມັນ ເດືອນ ມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
2. ປຶ້ມຫຼັກການສອນອະນຸບານ ກຸ່ມວິຊາຄູທົ່ວໄປ ສາຍສ້າງຄູອະນຸບານລະບົບ 2 ປີ ປີທີ 1 ປີ 2008.
3. ປຶ້ມວິທີສອນກາຍະສຶກສາ ກຸ່ມວິທີສອນສາຍສ້າງຄູອະນຸບານລະບົບ 2 ປີ ປີທີ 2 ປີ 2009.
4. ປຶ້ມແຜນຈັດປະສົບການຊັ້ນອະນຸບານ1 ກະຊວງສຶກສາທິການ, ກົມສາມັນ ເດືອນມີນາ (3) ປີ 2005 ພິມທີ່ເອກະພາບການພິມ.
5. ຄູ່ມືຄູພະລະສຶກສາ, ຫັດຖະກໍາ, ສິລະປະກໍາ, ສິລະປະດົນຕີຊັ້ນປະຖົມ ປີທີໜຶ່ງ ກະຊວງສຶກສາທິການ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

### ກິດຈະກໍາວົງມົນ

6. ຄູ່ມືຄູການຈັດກິດຈະກໍາການຮຽນ-ການສອນ ຊັ້ນອະນຸບານກົມສາມັນສຶກສາ ກະຊວງສຶກສາທິການ.
7. ຫຼັກການສອນເດັກກ່ອນໄວຮຽນລະບົບ 11+3 ກະຊວງສຶກສາທິການ ປີ 2008.

### ກິດຈະກໍາສິລະປະສ້າງສັນ

8. ຄູ່ມືຄູກິດຈະກໍາສ້າງສັນ (ສິລະປະສຶກສາ) ຊັ້ນອະນຸບານ ປີ 1992.
9. ກະຊວງສຶກສາທິການ, ກົມສາມັນສຶກສາຄູ່ມືຄູກິດຈະກໍາການສອນ ຊັ້ນອະນຸບານ ປີ 2005.
10. ກະຊວງສຶກສາທິການ, ປຶ້ມຫຼັກການສອນອະນຸບານ ລະບົບ 11+2 ປີ 2008 (ໜ້າ 93).

### ກິດຈະກໍາການຫຼິ້ນກາງແຈ້ງ

11. ຄູ່ມືຄູ ກິດຈະກໍາກາງແຈ້ງ ຊັ້ນອະນຸບານ ກະຊວງສຶກສາ ປີ 1990.
12. ຄູ່ມືຄູ ກິດຈະກໍາການສອນ ຊັ້ນອະນຸບານ ກະຊວງສຶກສາ ປີ 1990 ໜ້າທີ 102,105,106,131.
13. ປຶ້ມແບບຮຽນວິຊາຫຼັກການສອນເດັກກ່ອນໄວຮຽນ ລະບົບ 11+2 ກົມສ້າງຄູ, ກະຊວງສຶກສາທິການ ປີ 2004 (ບົດທີ 11 ກິດຈະກໍາກາງແຈ້ງ).

### ກິດຈະກໍາເກມການສຶກສາ

14. ປຶ້ມແຜ່ນຈັດປະສົບການ ຊັ້ນອະນຸບານ 1 ເຫຼັ້ມ 1, ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ).
15. ປຶ້ມວິຊາ: ຫຼັກການສອນ 11+3 ສົກຮຽນ 2008 (ກະຊວງສຶກສາທິການ-ກົມສ້າງຄູ).

### ກິດຈະກໍາການຫຼິ້ນຕາມມຸມ

16. ປຶ້ມ ວິຊາຊອກຮູ້ສະພາບແວດລ້ອມ 11+3 ປີ 2008 (ກະຊວງສຶກສາທິການ-ກົມສ້າງຄູ).
17. ປຶ້ມ ແຜນຈັດປະສົບການຊັ້ນອະນຸບານ 1 ເຫຼັ້ມ 1 ປີ 2005 (ກະຊວງສຶກສາທິການ-ກົມສາມັນສຶກສາ).
18. ປຶ້ມ ການພັດທະນາໂຮງຮຽນຄຸນນະພາບ, ຄູ່ມື ຄູສອນຫ້ອງກຽມປະຖົມ (ກະຊວງສຶກສາ 2010).